# ມາດຕະຖານ

## ການປະຕິບັດການພະຍາບານ

ຈັດພິມໂດຍ: ກົມປິ່ນປົວ
ກະຊວງສາທາລະນະສຸກ
2017

# ຄຳເຫັນທ່ານລັດຖະມົນຕີກະຊວງສາທາລະນະສຸກ

ແນວທາງສາທາລະນະສຸກຂອງພັກສະໄໝທີ 10 ໄດ້ເໜັ້ນອີກວ່າ: ຖືເອົາການອະນາໄມກັນພະຍາດ ແລະ ສົ່ງເສີມສຸຂະພາບ ເປັນຕົ້ນຕໍ, ຖືເອົາການປິ່ນປົວ ແລະສະໜອງການບໍລິການຢ່າງທົ່ວເຖິງ ມີຄຸນນະພາບ ຍຸດຕິທຳ ແລະສະເໝີພາບເປັນສຳຄັນ ເພື່ອບັນລຸໄດ້ຕາມແນວທາງດັ່ງກ່າວນັ້ນ ມັນຮຽກຮ້ອງໃຫ້ ຜູ້ປະກອບວິຊາຊີບປິ່ນປົວທຸກຄົນມີສ່ວນຮ່ວມຢ່າງແຂງແຮງພາຍໃນຂະແໜງການ, ມີຄວາມເປັນເຈົ້າການ ແລະ ມີຄວາມຮັບຜິດຊອບສູງ, ຍ້ອນວ່າວິຊາຊີບຂອງພວກເຮົາແມ່ນການເຮັດວຽກເປັນທີມງານ, ມີການພົວພັນແບບກາຍອິນຊີ ລະຫວ່າງທ່ານໝໍ-ພະຍາບານ-ນັກວິເຄາະ-ລັງສີ-ກາຍຍະບຳບັດ ແລະອື່ນໆ, ຕັດແຍກອອກຈາກກັນບໍ່ໄດ້, ດ້ວຍຈຸດປະສົງ ແລະເປົ້າໝາຍອັນດຽວກັນ ຄື: ໃຫ້ການບໍລິການດ້ວຍໃຈ, ມີຄຸນນະພາບ, ທົ່ວເຖິງ ໂດຍຖືເອົາຄວາມປອດໄພຂອງຄົນເຈັບເປັນຫລັກ.

ກະຊວງສາທາລະນະສຸກໄດ້ກ້າວເຂົ້າສູ່ໄລຍະທີ 2 ຂອງການປະຕິຮູບສາທາລະນະສຸກ ໂດຍແນໃສ່ປະຕິບັດເປົ້າໝາຍທີ່ສາມ ຂອງການພັດທະນາແບບຍືນຍົງ, ຮັບປະກັນການເຂົ້າເຖິງການບໍລິການຮັກສາສຸຂະພາບທຸກຖ້ວນໜ້າ ແລະ ມີຄຸນນະພາບດີ. ການບໍລິການຮັກສາສຸຂະພາບທີ່ມີຄຸນນະພາບແມ່ນອົງປະກອບໜຶ່ງທີ່ສຳຄັນທີ່ສຸດຕໍ່ການດຳລົງຊີວິດຂອງປະຊາຊົນທີ່ຮຽກຮ້ອງໃຫ້ມີ. ພະຍາບານໃຫ້ບໍລິການພະຍາບານຢ່າງເປັນລະບົບ, ມີການສະໜັບສະໜູນຈາກອຳນາດການປົກຄອງ ແລະພາກສ່ວນກ່ຽວຂ້ອງ, ມີການຮ່ວມມືກັບຜູ້ປະກອບວິຊາຊີບປິ່ນປົວອື່ນໆຈຶ່ງຈະໄດ້ຄວາມເຊື່ອຖື ແລະໄວ້ວາງໃຈກໍ່ຄືຄວາມເພິ່ງພໍໃຈຈາກພໍ່ແມ່ປະຊາຊົນ.

ດັ່ງນັ້ນ, ການສ້າງມາດຕະຖານການພະຍາບານ ເຊັ່ນ: ມາດຕະຖານການປະຕິບັດການພະຍາບານ,ການພັນລະນາຕຳແໜ່ງງານ ແລະລະບົບເຮັດວຽກ 8 ຊົ່ວໂມງ ແລະ 12 ຊົ່ວໂມງ, ຂອບເຂດການປະຕິບັດ ການພະຍາບານ ເຫລົ່ານີ້ແມ່ນມີຄວາມຈຳເປັນຕໍ່ວິຊາຊີບພະຍາບານ, ຈະໄດ້ມີບ່ອນອີງໃນການພັດທະນາເຄື່ອງມືເພື່ອນຳໃຊ້ເຂົ້າໃນການຕິດຕາມຊຸກຍູ້, ປະເມີນຜົນ ແລະຄວບຄຸມຄຸນນະພາບໃນການບໍລິການພະຍາບານ ທັງເປັນແນວທາງໃນການນຳໄປສູ່ການປະຕິບັດທີ່ເປັນເອກະພາບ, ມີການພັດທະນາວິຊາຊີບພະຍາບານແບບຕໍ່ເນື່ອງ ແລະສິ່ງສຳຄັນແມ່ນຜົນປະໂຫຍດຂອງຜູ້ໃຊ້ບໍລິການຈະໄດ້ຮັບການບໍລິການທີ່ມີຄຸນະພາບ ແລະປອດໄພ.

ຂ້າພະເຈົ້າໃນນາມການນຳກະຊວງສາທາລະນະສຸກຂໍສະແດງຄວາມຊົມເຊີຍຕໍ່ທີມງານພະຍາບານຜູ້ທີ່ໄດ້ທຸ້ມເທເຫື່ອແຮງ ສະຕິປັນຍາ ກຳນົດ ມາດຕະຖານການປະຕິບັດການພະຍາບານຈົນສຳເລັດ, ຂໍສະແດງຄວາມຂອບໃຈແລະຮູ້ບຸນຄຸນມາຍັງໂຄງການນ້ຳເທີນ 2 ທີ່ໄດ້ໃຫ້ການຊ່ວຍເຫລືອດ້ານງົບປະມານ. ຂ້າພະເຈົ້າເຊື່ອໝັ້ນວ່າພະຍາບານທັງໝົດມີຄວາມມຸ່ງໝັ້ນສຸມຈິດໃຈໃນການປະຕິບັດໜ້າວຽກຂອງຕົນແບບມືອາຊີບ, ດ້ວຍຄວາມຮັບຜິດຊອບສູງ ແລະມີຄຸນນະທຳ.

ລັດຖະມົນຕີ

ກະຊວງ ສາທາລະນະສຸກ

ລັດຖະມົນຕີ

ຮສ ດຣ ບຸນກອງ ສີຫາວົງ

# ສາລະບານ

ໜ້າ

ບົດນຳ

ໝວດທີ I ດ້ານການບໍລິການ

ມາດຕະຖານ 1: ພະຍາບານໃຫ້ການດູແລຄົນເຈັບໃນສະຖານທີ່ບໍລິການປິ່ນປົວຢ່າງຕໍ່ເນື່ອງຕະຫຼອດ 24 ຊົ່ວໂມງ....................................1

ມາດຕະຖານ 2: ນຳໃຊ້ຂະບວນການພະຍາບານທີ່ຄອບຄຸມອີງລວມໃນການດູແລຄົນເຈັບ........................................................1

ມາດຕະຖານ 3: ການກວດຢ້ຽມຄົນເຈັບໃນແຕ່ລະຟຽນເຮັດວຽກຂອງທີມຮັບຜິດຊອບ........................................................3

ມາດຕະຖານ 4: ການກັນຄົນເຈັບຈາກການຕິດເຊື້ອໃນໂຮງໝໍ....................4

ມາດຕະຖານ 5: ການໃຫ້ສຸຂະສຶກສາແກ່ຜູ້ມາໃຊ້ບໍລິການຍາດພີ່ນ້ອງຕາມບັນຫາແລະຄວາມຕ້ອງການ............................................5

ມາດຕະຖານ 6: ການຈັດຫາ ແລະປົກປັກຮັກສາອຸປະກອນ / ເຄື່ອງມື ເຄື່ອງໃຊ້ແລະຢາທີ່ຈຳເປັນສຳຫຼັບການຮັກສາພະຍາບານຄົນເຈັບໃຫ້ພ້ອມທີ່ຈະໃຊ້ໄດ້ທັນທີ................................................5

ມາດຕະຖານ 7: ການວາງແຜນ ແລະກຽມຄົນເຈັບກ່ອນຈະອອກໂຮງໝໍໃຫ້ສາມາດດູແລຕົນເອງຕໍ່ເນື່ອງຢູ່ບ້ານ.......................................6

ມາດຕະຖານ 8: ສົ່ງເສີມໃຫ້ຄົນເຈັບປັບຕົວເຂົ້າກັບສະພາບແວດລ້ອມເວລານອນປິ່ນປົວຢູ່ໃນໂຮງໝໍ............................................7

ມາດຕະຖານ 9: ສົ່ງເສີມ, ຟື້ນຟູຄວາມສາມາດທາງດ້ານຮ່າງກາຍ ແລະຈິດໃຈໃນການຊ່ວຍເຫຼືອຕົນເອງຂອງຄົນເຈັບ............................7

ມາດຕະຖານ 10: ຜູ້ມາໃຊ້ບໍລິການ ມີຄວາມເພິ່ງພໍໃຈຕໍ່ການບໍລິການກວດສຸຂະພາບ........................................................8

ໝວດທີ II ການປະພຶດດ້ານວິຊາຊີບ
ມາດຕະຖານ 1: ປະເມີນຜົນຄຸນນະພາບ ແລະປະສິດທິພາບຂອງການປະຕິບັດການພະຍາບານ.....9
ມາດຕະຖານ 2: ປະເມີນຜົນການປະຕິບັດການພະຍາບານຂອງຕົນເອງຕາມຂີດຄວາມສາມາດຂອງພະຍາບານ ແລະຂອບເຂດການປະຕິບັດການພະຍາບານ.....9
ມາດຕະຖານ 3: ພະຍາບານຕ້ອງພັດທະນາຄວາມຮູ້ຄວາມສາມາດດ້ານປະຕິບັດການພະຍາບານໃຫ້ທັນກັບສະພາບການປູ່ສະເໝີ.....9
ມາດຕະຖານ 4: ການມີສ່ວນຮ່ວມ, ສົ່ງເສີມ ແລະສະໜັບສະໜູນຄວາມກ້າວໜ້າຂອງທີມສຸຂະພາບ.....10
ມາດຕະຖານ 5: ພະຍາບານຍຶດຖືຈັນຍາບັນວິຊາຊີບໃນການຕັດສິນໃຈ ແລະໃຫ້ບໍລິການພະຍາບານຕໍ່ຄົນເຈັບ.....10
ມາດຕະຖານ 6: ປະຕິບັດການພະຍາບານທີ່ເໝາະສົມ ແລະດີທີ່ສຸດຕໍ່ຄົນເຈັບ...10

ເອກະສານຊ້ອນທ້າຍ
1 ລະບົບການເຮັດວຽກ 8 ຊົ່ວໂມງ.....13
2 ລະບົບການເຮັດວຽກ 12 ຊົ່ວໂມງ.....31
ລາຍຊື່ຜູ້ປະກອບສ່ວນ.....46

# ບົດນຳ

ການພະຍາບານໝາຍເຖິງການປະຕິບັດເພື່ອຊຸກຍູ້ບັນດາກິດຈະກຳທີ່ຕ້ອງການທາງດ້ານຮ່າງກາຍ, ຈິດໃຈ, ອາລົມ ແລະສັງຄົມຂອງບຸກຄົນ, ຄອບຄົວ ແລະຊຸມຊົນ ເພື່ອໃຫ້ໄດ້ສຸຂະພາບຄືນມາ, ເພື່ອຟື້ນຟູ, ຮັກສາ ແລະສົ່ງເສີມສຸຂະພາບດ້ວຍກຳລັງຂອງເຂົາເຈົ້າເອງ ໂດຍອີງໃສ່ສະຖານະພາບ ແລະຄວາມຕ້ອງການທາງດ້ານສຸຂະພາບຂອງເຂົາເຈົ້າ. ການພະຍາບານຍັງເປັນຕ່ອງໂສ້ຂອງຂະບວນການສະໜັບສະໜູນ ທີ່ລວມເອົາການສົ່ງເສີມສຸຂະພາບ, ການກັນພະຍາດ, ການຂາຍຈາກພະຍາດ, ການຟື້ນຟູໜ້າທີ່ການ ແລະການເສຍຊີວິດຢ່າງສະຫງົບ ໂດຍອີງໃສ່ທິດສະດີວິທະຍາສາດ ແລະສິນລະປະການພະຍາບານ. ການໃຫ້ການພະຍາບານ ໝາຍເຖິງການພະຍາບານທີ່ຖືກປະຕິບັດໂດຍພະຍາບານບົນພື້ນຖານຫຼັກວິທະຍາສາດ ແລະສິນລະປະການພະຍາບານ.

ມາດຕະຖານການພະຍາບານ ແມ່ນມີຄວາມຈຳເປັນຕໍ່ວິຊາຊີບພະຍາບານ. ເປັນສິ່ງທີ່ຊີ້ບອກຄຸນນະພາບ ແລະເປັນເຄື່ອງມືສຳຄັນທີ່ໃຊ້ໃນການຄວບຄຸມຄຸນນະພາບໃນການບໍລິການພະຍາບານ, ໃນປະຈຸບັນ ກະຊວງສາທາລະນະສຸກແມ່ນໄດ້ມີຄວາມເອົາໃຈໃສ່ໃນການປັບປຸງການບໍລິການຂອງໂຮງໝໍສູນກາງໃຫ້ເປັນໂຮງໝໍທີ່ທັນສະໄໝ ໂດຍສະເພາະແມ່ນໄດ້ສຸມໃສ່ການກໍ່ສ້າງພະນັກງານ, ພະຍາບານ ໃຫ້ມີຄວາມຮູ້ ຄວາມສາມາດ, ປັບປຸງອຸປະກອນເຄື່ອງມືໃຫ້ທັນສະໄໝ ແນໃສ່ເພື່ອໃຫ້ບໍລິການແກ່ປະຊາຊົນລາວບັນດາເຜົ່າຢ່າງມີຄຸນນະພາບ. ຄຽງຄູ່ກັບສິ່ງດັ່ງກ່າວນັ້ນວຽກພະຍາບານກໍຖືເປັນຫົວໃຈສຳຄັນຂອງການບໍລິການ, ການທີ່ຈະເຮັດໃຫ້ການບໍລິການພະຍາບານມີຄຸນນະພາບໃກ້ຄຽງກັບສາກົນເຮົາຈຳເປັນຈະຕ້ອງມີມາດຕະຖານການພະຍາບານໃນແຕ່ລະຂະແໜງການ ເພາະຖ້າມີມາດຕະຖານແລ້ວກໍຈະເປັນແນວທາງໃນການນຳໄປປະຕິບັດໃຫ້ເອກະພາບກັນ ແລະທີ່ສຳຄັນແມ່ນຜູ້ຮັບບໍລິການຈະໄດ້ຮັບການບໍລິການທີ່ມີຄຸນນະພາບ. ນອກຈາກນີ້ມາດຕະຖານການພະຍາບານຍັງແມ່ນເຄື່ອງມືທີ່ສຳຄັນໃນການປະເມີນການເຮັດວຽກຂອງພະຍາບານ. ຖ້າວຽກງານຂອງພະຍາບານບໍ່ມີມາດຕະຖານການພະຍາບານແລ້ວ ຈະເຮັດໃຫ້ບໍ່ສາມາດຮູ້ເຖິງລະດັບຄຸນນະພາບການພະຍາບານທີ່ຊັດເຈນ ເຮັດໃຫ້ວິຊາຊີບພະຍາບານຂາດຄວາມເຊື່ອຖືໄດ້. ດັ່ງນັ້ນ ຖືເປັນຄວາມຮັບຜິດຊອບຂອງພະຍາບານທຸກຄົນທີ່ຈະຕ້ອງປະຕິບັດຕາມມາດຕະຖານການປະຕິບັດພະຍາບານ.

ມາດຕະຖານການປະຕິບັດພະຍາບານ ປະກອບມີ 2 ໝວດ ຄື: ດ້ານການບໍລິການ ມີ 10 ມາດຕະຖານ ແລະການປະພຶດດ້ານວິຊາຊີບ ມີ 6 ມາດຕະຖານ ຊຶ່ງໃນແຕ່ລະມາດຕະຖານຍັງປະກອບດ້ວຍເງື່ອນໄຂ

**ຈຸດປະສົງ:**

1. ເພື່ອເປັນບ່ອນອີງດ້ານນິຕິກຳໃຫ້ແກ່ການຈັດຕັ້ງ ແລະການເຄື່ອນໄຫວຂອງການບໍລິການພະຍາບານໃຫ້ມີຄຸນະພາບ ແລະເປັນແນວທາງໃຫ້ພະຍາບານໄດ້ປະຕິບັດໄປໃນທິດທາງດຽວກັນ
2. ເພື່ອຍົກສູງຄຸນນະພາບການບໍລິການພະຍາບານໃຫ້ສູງຂຶ້ນ ແລະເປັນເຄື່ອງມືປະເມີນການເຮັດວຽກຂອງພະຍາບານ

**ຂອບເຂດການນຳໃຊ້**

ມາດຕະຖານການປະຕິບັດພະຍາບານສະບັບນີ້ໃຊ້ກັບພະຍາບານ, ນັກສຶກສາພະຍາບານ ແລະຜູ້ທີ່ສົນໃຈ ໂດຍແນໃສ່ ການປະຕິບັດກັບຄົນເຈັບໃນໂຮງໝໍ.

# ມາດຕະຖານການປະຕິບັດການພະຍາບານ (Nursing Practice Standard)

## ໝວດທີ I: ດ້ານການບໍລິການ

**ມາດຕະຖານ 1: ພະຍາບານໃຫ້ການດູແລຄົນເຈັບໃນສະຖານທີ່ບໍລິການປິ່ນປົວຢ່າງຕໍ່ເນື່ອງຕະຫຼອດ 24 ຊົ່ວໂມງ**

**ເງື່ອນໄຂ:**

ກ. ເຮັດວຽກ 8 ຊົ່ວໂມງ/ມື້, ໂດຍຈັດ 3 ຝຽນ ຫຼື 12 ຊົ່ວໂມງ/ມື້ ຈັດ 2 ຝຽນ;

ຂ. ມີພະຍາບານຊັ້ນກາງຂຶ້ນໄປເປັນຫົວໜ້າທີມຮັບຜິດຊອບດູແລຄົນເຈັບແຕ່ລະຝຽນ;

ຄ. ໃຫ້ການດູແລຄົນເຈັບເປັນລາຍບຸກຄົນໂດຍມີການມອບໝາຍກໍລະນີຄົນເຈັບ;

ງ. ລາຍງານຄົນເຈັບເປັນກໍລະນີ ແລະມອບວຽກເປັນທີມຝຽນຕໍ່ໄປ.

**ມາດຕະຖານ 2: ນຳໃຊ້ຂະບວນການພະຍາບານທີ່ຄອບຄຸມອີງລວມໃນການດູແລຄົນເຈັບ.**

**2.1 ລວບລວມຂໍ້ມູນກ່ຽວກັບສະພາບຄົນເຈັບ:**

**ເງື່ອນໄຂ:**

ກ. ຂໍ້ມູນໄດ້ຈາກການປະເມີນບັນຫາ ແລະຄວາມຕ້ອງການໃນປະຈຸບັນຂອງຄົນເຈັບໂດຍອີງໃສ່ແບບຟອມປະເມີນພາວະສຸຂະພາບຂອງຄົນເຈັບ;

ຂ. ຂໍ້ມູນຄອບຄຸມສະພາບທາງຮ່າງກາຍ, ຈິດໃຈ, ອາລົມ, ສັງຄົມແລະຈິດວິນຍານ;

ຄ. ຂໍ້ມູນສຳພາດຈາກຕົວຄົນເຈັບ, ຍາດພີ່ນ້ອງຜູ້ໃກ້ສິດ, ຈາກພະນັກງານທີ່ຮ່ວມໃຫ້ການດູແລ ແລະ ຈາກການລາຍງານທີ່ກ່ຽວຂ້ອງ;

ງ. ການລວບລວມຂໍ້ມູນຢ່າງເປັນລະບົບ ແລະ ຕໍ່ເນື່ອງ;

ຈ. ບັນທຶກຂໍ້ມູນໃສ່ເອກະສານຄົນເຈັບໃຫ້ຄົບຖ້ວນ ແລະ ເກັບຮັກສາໄວ້ໃຫ້ດີ.

### 2.2 ການບົ່ງມະຕິທາງການພະຍາບານ:

**ເງື່ອນໄຂ:**

ກ. ບົ່ງມະຕິທາງການພະຍາບານໂດຍການຈັດລຽງລຳດັບຄວາມສຳຄັນຂອງບັນຫາ ຈາກຂໍ້ມູນທີ່ລວບລວມໄດ້ຈາກການປະເມີນບັນຫາພາວະສຸຂະພາບຄົນເຈັບ;

ຂ. ບົ່ງມະຕິທາງການພະຍາບານທີ່ມີຄວາມສຳພັນລະຫວ່າງບັນຫາກັບຄວາມ ຕ້ອງການຂອງຄົນເຈັບ ແລະ ສາຍເຫດທີ່ພາໃຫ້ເກີດບັນຫາ;

ຄ. ບັນທຶກການບົ່ງມະຕິທາງການພະຍາບານໃສ່ໃບບັນທຶກຂອງພະຍາບານເພື່ອ ກຳນົດແຜນການພະຍາບານ.

### 2.3 ຄາດຄະເນຜົນໄດ້ຮັບຈາກການປະຕິບັດການພະຍາບານຕາມຊັບພະຍາກອນທີ່ມີຢູ່

**ເງື່ອນໄຂ:**

ກ. ຄົນເຈັບໄດ້ຮັບການບໍລິການພະຍາບານຕາມແຜນການພະຍາບານທີ່ມີຄຸນນະ ພາບໂດຍອີງໃສ່ ມາດຕະຖານທີ່ວາງໄວ້;

ຂ. ຄົນເຈັບ ແລະຍາດພີ່ນ້ອງມີສ່ວນຮ່ວມໃນການດູແລສຸຂະພາບຕົນເອງ;

ຄ. ຄົນເຈັບໃຫ້ຄວາມຮ່ວມມືໃນການປະຕິບັດຕາມແຜນການພະຍາບານ.

### 2.4 ວາງແຜນການພະຍາບານໃຫ້ຄົນເຈັບເປັນລາຍບຸກຄົນປະຕິບັດການພະຍາບານ ຕາມທີ່ຄາດຄະເນໄວ້:

**ເງື່ອນໄຂ:**

ກ. ວາງແຜນການພະຍາບານທີ່ແນໃສ່ແກ້ໄຂບັນຫາ ແລະໃຫ້ການພະຍາບານແກ່ ຄົນເຈັບແຕ່ລະຄົນໃຫ້ໄດ້ຕາມການຄາດຄະເນໄວ້;

ຂ. ວາງແຜນຮ່ວມກັບຄົນເຈັບ, ຍາດພີ່ນ້ອງ ແລະ ພະນັກງານທີ່ກ່ຽວຂ້ອງຕາມ ຄວາມເໝາະສົມ;

ຄ. ຂຽນແຜນການພະຍາບານເປັນລາຍລັກອັກສອນ ແລະ ໃຫ້ການພະຍາບານ ຢ່າງຕໍ່ເນື່ອງ;

ງ. ປັບປ່ຽນແຜນການພະຍາບານເມື່ອບັນຫາ ແລະ ອາການຂອງຄົນເຈັບປ່ຽນແປງ.



### 2.5 ໃຫ້ການບໍລິການພະຍາບານຕາມກິດຈະກຳ ແລະໄລຍະເວລາທີ່ກຳນົດໄວ້ໃນແຜນການພະຍາບານ

**ເງື່ອນໄຂ:**

ກ. ປະຕິບັດກິດຈະກຳພະຍາບານຕາມແຜນ ແລະເວລາທີ່ກຳນົດໄວ້;

ຂ. ແນະນຳໃຫ້ຄົນເຈັບ, ຄອບຄົວ ແລະ ພີ່ນ້ອງມີສ່ວນຮ່ວມດູແລສຸຂະພາບ;

ຄ. ອະທິບາຍການປະຕິບັດຕົວເວລານອນຮັກສາປິ່ນປົວໃນໂຮງໝໍ ແລະ ສືບຕໍ່ຢູ່ບ້ານ;

ງ. ຕິດຕາມອາການປ່ຽນແປງຂອງຄົນເຈັບ ແລະ ບັນທຶກ.

### 2.6 ປະເມີນຜົນຄວາມສອດຄ່ອງຕໍ່ການປ່ຽນແປງຂອງຄົນເຈັບກັບຜົນທີ່ຄາດຄະເນ.

**ເງື່ອນໄຂ:**

ກ. ປະເມີນຜົນການປ່ຽນແປງຂອງການພະຍາບານຕາມການຄາດຄະເນ;

ຂ. ປະເມີນບັນຫາຂອງຄົນເຈັບຢ່າງຕໍ່ເນື່ອງເພື່ອປັບປ່ຽນການບົ່ງມະຕິການພະຍາ ບານກັບສິ່ງທີ່ຄາດຄະເນ ແລະວາງແຜນການພະຍາບານຕາມຄວາມຈຳເປັນ;

ຄ. ໃຫ້ຄົນເຈັບ ແລະ ພະນັກງານທີ່ຮ່ວມດູແລມີສ່ວນຮ່ວມໃນຂະບວນການປະ ເມີນຕາມຄວາມເໝາະສົມ.

## ມາດຕະຖານ 3: ການກວດຢ້ຽມຄົນເຈັບໃນແຕ່ລະຝຽນເຮັດວຽກຂອງທີມຮັບຜິດຊອບ.

**ເງື່ອນໄຂ:**

ກ. ກວດຢ້ຽມຄົນເຈັບໃນຄວາມຮັບຜິດຊອບທັນທີພາຍຫຼັງຈາກມອບ-ຮັບລາຍ ງານການປ່ຽນຝຽນວຽກ;

ຂ. ປະເມີນບັນຫາ ແລະອາການຄົນເຈັບທີ່ຕົນຮັບຜິດຊອບຕື່ມອີກກ່ອນໃຫ້ການ ພະຍາບານ;

ຄ. ກວດຢ້ຽມຄົນເຈັບທີ່ມີອາການຮຸນແຮງ ຫຼື ມີການປ່ຽນແປງໄວເປັນໄລຍະໆ;

ງ. ກວດຢ້ຽມຄົນເຈັບທີ່ມີອາການບໍ່ຮຸນແຮງ ຫຼື ບໍ່ປ່ຽນແປງໄວຫຼັງໃຫ້ການ ພະຍາບານທຸກຄັ້ງ ແລະກ່ອນມອບວຽກ.

**ມາດຕະຖານ 4: ການກັນຄົນເຈັບຈາກການຕິດເຊື້ອໃນໂຮງໝໍ.**

**ເງື່ອນໄຂ:**

ກ. ລ້າງມືດ້ວຍນ້ຳສະອາດແລະສະບູ, ເຊັດມືດ້ວຍຜ້າ/ເຈັ້ຍສະອາດ ຫຼື ນຳໃຊ້ເຫຼົ້າຢາຂ້າເຊື້ອມື(alcoholic hand rub) ລູບມືກ່ອນ, ລະຫວ່າງ ແລະ ຫຼັງສຳພັດຄົນເຈັບ ຖ້າມືບໍ່ເປື້ອນເລືອດ ແລະ ສິ່ງຂັບລັ່ງຕ່າງໆ (ປະຕິບັດ 5 ຊ່ວງເວລາຂອງການລ້າງມື);

ຂ. ນຳໃຊ້ເຄື່ອງປ້ອງກັນຕົນເອງທີ່ເໝາະສົມກັບວິທະຍາການທີ່ຈະປະຕິບັດກັບຄົນເຈັບ;

ຄ. ປະຕິບັດເຕັກນິກການພະຍາບານໂດຍໃຊ້ຫຼັກການຂ້າເຊື້ອ ແລະ ອະເຊື້ອ (Dis infection and septic);

ງ. ເຮັດຄວາມສະອາດສິ່ງແວດລ້ອມຂອງໜ່ວຍງານ (ບ່ອນເຮັດວຽກຂອງພະຍາບານ ແລະ ຫ້ອງນອນຄົນເຈັບ) ຢ່າງໜ້ອຍມື້ລະ 2 ຄັ້ງ;

ຈ. ຈັດຕຽງນອນຄົນເຈັບໃຫ້ຫ່າງກັນຢ່າງໜ້ອຍ 1 ແມັດ;

ສ. ແຍກຄົນເຈັບທີ່ເປັນພະຍາດຕິດແປດອອກຈາກຄົນເຈັບທີ່ເປັນພະຍາດບໍ່ຕິດແປດ;

ຊ. ຈັດສະພາບແວດລ້ອມ;

ຍ. ແຍກຂີ້ເຫຍື້ອໃຫ້ຖືກຕ້ອງ;

ດ. ບໍ່ໃຫ້ສຸບປອກເຂັມຄືນ, ໃຫ້ຖິ້ມເຂັມ ແລະຂອງມີຄົມໃສ່ກ່ອງປອດໄພທີ່ກັນນ້ຳ ກັນແທງຊອດ.



**ມາດຕະຖານ 5: ການໃຫ້ສຸຂະສຶກສາແກ່ຜູ້ມາໃຊ້ບໍລິການ ຍາດພີ່ນ້ອງຕາມບັນຫາ ແລະ ຄວາມຕ້ອງການ.**

**ເງື່ອນໄຂ:**

ກ. ກຽມຄວາມພ້ອມຂອງຄົນເຈັບທາງດ້ານຮ່າງກາຍ ແລະຈິດໃຈກ່ອນການໃຫ້ສຸຂະສຶກສາ;

ຂ. ໃຫ້ສຸຂະສຶກສາທີ່ສອດຄ່ອງກັບບັນຫາ ແລະ ຄວາມຕ້ອງການຂອງຄົນເຈັບໂດຍເນັ້ນການຮ່ວມມືໃນການດູແລຕົນເອງເວລາຢູ່ໂຮງໝໍ ແລະ ຕໍ່ເນື່ອງຢູ່ບ້ານ;

ຄ. ໃຫ້ຄົນເຈັບ ຫຼື ຜູ້ໃກ້ສິດທີ່ຄອຍດູແລຄົນເຈັບ ເວົ້າຄືນສິ່ງທີ່ຈະປະຕິບັດໃນຂັ້ນຕໍ່ໄປເພື່ອທວນຄືນລະດັບຄວາມເຂົ້າໃຈ.

ງ. ກຽມຄວາມພ້ອມທາງດ້ານສະຖານທີ່.

**ມາດຕະຖານ 6: ການຈັດຫາ ແລະປົກປັກຮັກສາອຸປະກອນ/ເຄື່ອງມືເຄື່ອງໃຊ້ ແລະຢາທີ່ຈຳເປັນສຳຫຼັບການຮັກສາພະຍາບານຄົນເຈັບໃຫ້ພ້ອມໃຊ້ທັນທີ.**

**ເງື່ອນໄຂ:**

ກ. ຈັດອຸປະກອນ/ເຄື່ອງມືເຄື່ອງໃຊ້ເປັນໝວດ ແລະ ຕິດປ້າຍລະບຸວັນທີ ເດືອນ ປີ ອະເຊື້ອ ແລະໝົດອາຍຸ ໃສ່ເພື່ອສະດວກຕໍ່ການນຳໃຊ້;

ຂ. ກຽມອຸປະກອນ/ເຄື່ອງມືເຄື່ອງໃຊ້ ທີ່ສະອາດ, ອະເຊື້ອ ແລະຢາໃຫ້ພຽງພໍພ້ອມທີ່ຈະໃຊ້ໄດ້ທັນທີ ແລະ ຕູ້ຢາກະທັນຫັນໃຫ້ໃກ້ກັບຫ້ອງຄົນເຈັບໜັກ;

ຄ. ເຮັດຄວາມສະອາດ, ບຳລຸງຮັກສາ ແລະຄຸ້ມຄອງອຸປະກອນເຄື່ອງມືເຄື່ອງໃຊ້ບໍ່ໃຫ້ເສຍຫາຍ.

## ມາດຕະຖານ 7: ການວາງແຜນ ແລະ ກຽມຄົນເຈັບກ່ອນຈະອອກໂຮງໝໍໃຫ້ສາມາດ ດູແລຕົນເອງຕໍ່ເນື່ອງຢູ່ບ້ານ.

**ເງື່ອນໄຂ:**

ກ. ປະເມີນບັນຫາ ແລະຄວາມຕ້ອງການຂອງຄົນເຈັບຕໍ່ເນື່ອງຕັ້ງແຕ່ເລີ່ມຮັບເຂົ້ານອນປິ່ນປົວ ຈົນເຖິງມື້ອອກໂຮງໝໍ;

ຂ. ປະເມີນສະພາບ ແລະລະດັບຄວາມພ້ອມໃນການດູແລຕົນເອງຂອງຄົນເຈັບກ່ອນອອກໂຮງໝໍ;

ຄ. ບອກວິທີປົວລະບັດ/ດູແລຕົນເອງຢູ່ບ້ານ ເຊັ່ນ: ສັງເກດອາການຜິດປົກກະຕິ, ສຸຂະພິບານດ້ານຮ່າງກາຍ, ກິດຈະວັດປະຈຳວັນ, ອາຫານທີ່ເໝາະສົມ, ການພັກຜ່ອນນອນຫລັບ, ການອອກກຳລັງກາຍ, ການກິນຢາ, ການປະຖົມພະຍາບານທີ່ຈຳເປັນ ແລະ ການມາກວດຄືນຕາມການນັດໝາຍຂອງທ່ານໝໍ;

ງ. ອະທິບາຍໃຫ້ຄົນເຈັບ, ຄອບຄົວ ແລະ ພີ່ນ້ອງສືບຕໍ່ຮ່ວມມືໃນການດູແລຄົນເຈັບຢູ່ບ້ານ, ຖ້າມີອາການຜິດປົກກະຕິໃຫ້ມາປຶກສາ ຫຼື ກວດສຸຂະພາບກ່ອນວັນນັດໝາຍ;

ຈ. ໃນກໍລະນີຄົນເຈັບທີ່ຕ້ອງສົ່ງຕໍ່ໄປບ່ອນທີ່ມີເງື່ອນໄຂໃຫ້ພະຍາບານສະຫຼຸບບັນຫາ, ຄວາມຕ້ອງການຂອງຄົນເຈັບ, ເອກະສານໃຫ້ຄົບຖ້ວນ ແລະ ພ້ອມກັນນັ້ນຕ້ອງໄດ້ລຸລ່ວງບັນຫາແນວຄິດໃຫ້ຄົນເຈັບ ແລະ ຍາດພີ່ນ້ອງຮັບຮູ້ ແລະໃຫ້ການຊ່ວຍເຫຼືອທີ່ຈຳເປັນກ່ອນນຳສົ່ງ.



## ມາດຕະຖານ 8: ສົ່ງເສີມໃຫ້ຄົນເຈັບປັບຕົວເຂົ້າກັບສະພາບແວດລ້ອມ ເວລານອນປິ່ນປົວຢູ່ໃນໂຮງໝໍ.

**ເງື່ອນໄຂ:**

ກ. ຈັດສະຖານທີ່ເໝາະສົມກັບສະພາບການເຈັບປ່ວຍ;

ຂ. ຈັດສະພາບແວດລ້ອມໃຫ້ສະອາດຮຽບຮ້ອຍ ແລະ ເຄື່ອງໃຊ້ທີ່ຈຳເປັນໃຫ້ຢູ່ໃກ້ຕົວຄົນເຈັບ;

ຄ. ອະທິບາຍລະບຽບການຕ່າງໆ ຂອງພະແນກ, ຂະແໜງ, ໜ່ວຍງານຈຸງານ ແລະ ລະບົບການພະຍາບານໃນໂຮງໝໍ;

ງ. ອະທິບາຍສະພາບການເຈັບເປັນ, ການພະຍາບານໃຫ້ຄົນເຈັບ ແລະ ຍາດພີ່ນ້ອງຮັບຮູ້.

## ມາດຕະຖານ 9: ສົ່ງເສີມ, ຟື້ນຟູຄວາມສາມາດທາງດ້ານຮ່າງກາຍ ແລະ ຈິດໃຈໃນການຊ່ວຍເຫຼືອຕົນເອງຂອງຄົນເຈັບ

**ເງື່ອນໄຂ:**

ກ. ປະເມີນ ຄວາມພ້ອມໃນການຊ່ວຍເຫຼືອຕົນເອງຂອງຄົນເຈັບ;

ຂ. ວາງແຜນໃຫ້ຄົນເຈັບດູແລຊ່ວຍເຫຼືອຕົນເອງ,ອຳນວຍຄວາມສະດວກຕ່າງໆ ແລະເພີ່ມບາງກິດຈະກຳໃນການດຳລົງຊີວິດປະຈຳວັນເວລາຢູ່ໃນໂຮງໝໍ ແລະ ສືບຕໍ່ຢູ່ບ້ານ;

ຄ. ເປີດໂອກາດໃຫ້ຄົນເຈັບ ແລະ ພີ່ນ້ອງຄົນເຈັບໄດ້ສອບຖາມຂໍ້ຂ້ອງໃຈຕ່າງໆ;

ງ. ເປັນຜູ້ໃຫ້ຄຳປຶກສາ ແລະ ຄຳແນະນຳທີ່ດີໃນການຊ່ວຍເຫຼືອເບິ່ງແຍງຕົນເອງ.

## ມາດຕະຖານ 10: ຜູ້ມາໃຊ້ບໍລິການມີຄວາມເພິ່ງພໍໃຈຕໍ່ການບໍລິການກວດສຸຂະພາບ

### 10.1 ໄລຍະກ່ອນເຂົ້າກວດ

**ເງື່ອນໄຂ:**

ກ. ຈັດສະຖານທີ່ ແລະສິ່ງແວດລ້ອມໃຫ້ສະອາດ, ສະດວກໃນການຕິດຕໍ່ພົວພັນກັບປະຊາສໍາພັນ;

ຂ. ທັກທາຍ, ຮັບຕ້ອນຜູ້ມາໃຊ້ບໍລິການດ້ວຍຄວາມຍິ້ມແຍ້ມແຈ່ມໃສ ແລະມີຄວາມຕຽມພ້ອມຊ່ວຍເຫຼືອ;

ຄ. ຄັດກອງ ແລະແຍກປະເພດຄົນເຈັບໂດຍການສອບຖາມປະຫວັດອາການໃຫ້ລະອຽດ ແລະ ຈັດບູລິມະສິດຂອງຜູ້ໃຊ້ບໍລິການໃນການເຂົ້າກວດ;

ງ. ອະທິບາຍຂັ້ນຕອນການໃຊ້ບໍລິການກວດສຸຂະພາບຢູ່ກວດເຂດນອກ;

ຈ. ປົກປ້ອງຜູ້ມາໃຊ້ບໍລິການໂດຍການຈັດຄິວເຂົ້າກວດ (ບໍ່ໃຫ້ຖືກລະເມີດສິດ).

### 10.2 ໄລຍະກວດສຸຂະພາບ

**ເງື່ອນໄຂ:**

ກ. ຊ່ວຍເຫຼືອຜູ້ມາໃຊ້ບໍລິການໄດ້ຮັບການກວດສຸຂະພາບຕາມການຄັດກອງໃຫ້ມີຄວາມສະດວກ ແລະ ປອດໄພ;

ຂ. ເວລາກວດຮ່າງກາຍຜູ້ໃຊ້ບໍລິການຕ້ອງມີທ່ານໝໍ ແລະ ພະຍາບານເຮັດວຽກຮ່ວມກັນ;

### 10.3 ໄລຍະຫຼັງກວດສຸຂະພາບ

**ເງື່ອນໄຂ:**

ກ. ໃຫ້ການແນະນໍາຢ່າງຈະແຈ້ງແກ່ຜູ້ມາໃຊ້ບໍລິການກ່ຽວກັບວິທີການປິ່ນປົວ;

ຂ. ໃຫ້ສຸຂະສຶກສາແກ່ຜູ້ມາໃຊ້ບໍລິການ ແລະ ຄອບຄົວກ່ຽວກັບການປະຕິບັດຕົວຕໍ່ຢູ່ບ້ານ;

ຄ. ອະທິບາຍໃນການມາໃຊ້ບໍລິການຕາມການນັດໝາຍຂອງທ່ານໝໍ;

ງ. ອະທິບາຍວິທີການກິນຢາໃຫ້ຖືກຕາມແຜນການປິ່ນປົວພາຍຫຼັງໄດ້ຮັບຢາ;

ຈ. ປະເມີນຄວາມເພິ່ງພໍໃຈຂອງຜູ້ໃຊ້ບໍລິການ.



# ໝວດທີ II: ການປະພຶດດ້ານວິຊາຊີບ

## ມາດຕະຖານ 1: ປະເມີນຜົນຄຸນນະພາບ ແລະປະສິດທິພາບຂອງການປະຕິບັດການ ພະຍາບານ.

**ເງື່ອນໄຂ:**

ກ. ໄປຢ້ຽມກວດຄົນເຈັບເປັນທີມ;

ຂ. ມີການຕິດຕາມຊຸກຍູ້ເວລາປະຕິບັດການພະຍາບານ;

ຄ. ປະຊຸມປຶກສາຫາລືກ່ອນ ແລະ ຫຼັງປະຕິບັດການພະຍາບານ;

ງ. ປະຊຸມປຶກສາຫາລືເປັນກໍລະນີ.

## ມາດຕະຖານ 2: ປະເມີນຜົນການປະຕິບັດການພະຍາບານຂອງຕົນເອງຕາມຂີດຄວາມສາມາດຂອງພະຍາບານ ແລະຂອບເຂດການປະຕິບັດການພະຍາບານ

**ເງື່ອນໄຂ:**

ກ. ປະເມີນກິດຈະກໍາຕາມຂີດຄວາມສາມາດຂອງພະຍາບານ;

ຂ. ປະເມີນການປະຕິບັດດ້ານເຕັກນິກຕາມຂອບເຂດການປະຕິບັດການພະຍາບານ;

ຄ. ປະເມີນຜົນການປະຕິບັດການພະຍາບານຕາມການບົ່ງມະຕິທາງການພະຍາບານ ແລະ ແຜນການພາຍຫຼັງໃຫ້ການພະຍາບານແຕ່ລະຄັ້ງ;

ງ. ທີມງານສຸຂະພາບມີສ່ວນຮ່ວມໃນການປະເມີນຜົນການປະຕິບັດຂອງພະຍາບານ.

## ມາດຕະຖານ 3: ພະຍາບານຕ້ອງພັດທະນາຄວາມຮູ້ຄວາມສາມາດດ້ານປະຕິບັດການ ພະຍາບານໃຫ້ທັນກັບສະພາບການຢູ່ສະເໝີ.

**ເງື່ອນໄຂ:**

ກ. ເຂົ້າຮ່ວມກິດຈະກໍາວິຊາການດ້ານການພະຍາບານ ແລະຄວາມກ້າວໜ້າຂອງວິຊາຊີບ ເຊັ່ນ: ການຈັດງານວາງສະແດງດ້ານເຕັກນິກວິຊາການ, ການສໍາມະນາວິຊາການຕ່າງໆ, ການຝຶກອົບຮົມອື່ນໆ.

ຂ. ສະແຫວງຫາຄວາມຮູ້, ປະສົບການ ແລະຄວາມຊໍານານງານທີ່ສອດຄ່ອງກັບສະພາບການປະຕິບັດວຽກງານຂອງຕົນຢ່າງຕໍ່ເນື່ອງ.

**ມາດຕະຖານ 4: ການມີສ່ວນຮ່ວມ, ສົ່ງເສີມ ແລະ ສະໜັບສະໜູນຄວາມກ້າວໜ້າ ຂອງທີມສຸຂະພາບ.**

**ເງື່ອນໄຂ:**

ກ. ແລກປ່ຽນຄວາມຮູ້, ປະສົບການ, ຄວາມຊໍານານກັບຜູ້ຮ່ວມວິຊາຊີບ ແລະຜູ້ຮ່ວມງານອື່ນໆ;

ຂ. ປະກອບຄວາມຄິດເຫັນໃນທາງທີ່ສ້າງສັນຕໍ່ຜົນງານຂອງເພື່ອນຮ່ວມງານ;

ຄ. ຮ່ວມຈັດສະພາບແວດລ້ອມຂອງສະຖານທີ່ບໍລິການໃຫ້ສົມກັບເປັນບ່ອນຝຶກປະຕິບັດຂອງນັກສຶກສາ.

**ມາດຕະຖານ 5: ພະຍາບານຍຶດຖືຈັນຍາບັນວິຊາຊີບໃນການຕັດສິນໃຈ ແລະ ໃຫ້ບໍລິການພະຍາບານຕໍ່ຄົນເຈັບ.**

**ເງື່ອນໄຂ:**

ກ. ໃຫ້ການພະຍາບານໂດຍບໍ່ຈໍາແນກຊົນຊັ້ນ, ເຊື້ອຊາດ, ສາດສະໜາ, ເພດ ແລະ ອາຍຸ ໂດຍການເຄົາຣົບຫລັກຈັນຍາບັນວິຊາຊີບ;

ຂ. ໃຫ້ການພະຍາບານດ້ວຍຄວາມເຄົາລົບສິດ, ຄວາມເປັນສ່ວນຕົວ ແລະ ກຽດສັກສີຂອງຄົນເຈັບ;

ຄ. ຮັກສາຄວາມລັບຂອງຄົນເຈັບ;

ງ. ປະຕິບັດຕໍ່ຄົນເຈັບໃຫ້ຄືກັນກັບປະຕິບັດຕໍ່ຕົນເອງ;

**ມາດຕະຖານ 6: ປະຕິບັດການພະຍາບານທີ່ເໝາະສົມ ແລະ ດີທີ່ສຸດຕໍ່ຄົນເຈັບ.**

**ເງື່ອນໄຂ:**

ກ. ການປະຕິບັດກິດຈະກໍາພະຍາບານ ແນໃສ່ຄວາມປອດໄພ ແລະໃຫ້ເກີດປະໂຫຍດສູງສຸດຕໍ່ຄົນເຈັບ;

ຂ. ມອບໝາຍວຽກງານໃຫ້ພະຍາບານຕາມຄວາມຮູ້ຄວາມສາມາດໃຫ້ເໝາະສົມກັບສະພາບຂອງຜູ້ມາໃຊ້ບໍລິການ;

ຄ. ແນະນໍາໃຫ້ຜູ້ໃຊ້ບໍລິການ ແລະພີ່ນ້ອງເຂົ້າໃຈເພື່ອເຂົ້າເຖິງການບໍລິການທີ່ສອດຄ່ອງກັບຄວາມຕ້ອງການຂອງຄົນເຈັບ.



# ເອກະສານຊ້ອນທ້າຍ ທີ 1

# ລະບົບການເຮັດວຽກ 8 ຊົ່ວໂມງ/ມື້

ຄວາມໝາຍ: ການເຮັດວຽກ 8 ຊົ່ວໂມງຕໍ່ມື້ໝາຍເຖິງພະຍາບານຜູ້ໜຶ່ງ ເຮັດວຽກດູແລຄົນເຈັບ 8 ຊົ່ວໂມງຕໍ່ມື້ ເທົ່າກັບ 40 ຊົ່ວໂມງຕໍ່ອາທິດ,ຖ້າມີຊົ່ວໂມງເກີນຈຳນວນດັ່ງກ່າວໃຫ້ຄິດໄລ່ເປັນເງິນເຮັດວຽກປະຈຳການນອກໂມງລັດຖະການ

1. ໃນໜຶ່ງມື້ ມີ 24 ຊົ່ວໂມງ ຊຶ່ງແບ່ງເວລາການເຮັດວຽກອອກເປັນ 3 ຝຽນຄື:
   - ຝຽນເຊົ້າ (Day shift: D) ຕັ້ງແຕ່ເວລາ 8ມ.00 - 16ມ.00.
   - ຝຽນແລງ (Evening shift: E) ຕັ້ງແຕ່ເວລາ 16ມ.00 - 24ມ.00.
   - ຝຽນເດິກ (Night shift: N) ຕັ້ງແຕ່ເວລາ 24ມ.00 - 8ມ.00.
2. ການຈັດຕາຕະລາງເຮັດວຽກ:
   - ໃນອາທິດໜຶ່ງມີວັນພັກ 2 ມື້ ອາດຈະໄດ້ພັກຕິດຕໍ່ກັນ ຫຼື ບໍ່ຕິດກັນກໍ່ໄດ້
   - ຝຽນເຊົ້າເຮັດວຽກຕິດກັນບໍ່ໃຫ້ເກີນ 4 - 5 ມື້
   - ຝຽນແລງເຮັດວຽກຕິດກັນບໍ່ໃຫ້ເກີນ 2 - 3 ມື້ ແລະຫ້າມຢູ່ຕໍ່ຝຽນເດິກ
   - ຝຽນເດິກເຮັດວຽກຕິດຕໍ່ກັນບໍ່ໃຫ້ເກີນ 2 ມື້ ແລະ ຫ້າມຢູ່ຕໍ່ຝຽນເຊົ້າ
3. ຕາຕະລາງເຮັດວຽກ ຕ້ອງອອກທຸກໆ ວັນທີ 25 ຂອງເດືອນ
4. ກໍລະນີຂໍລາພັກຕ້ອງຂໍກ່ອນວັນທີ 15 ຂອງເດືອນ ແລະຫົວໜ້າໜ່ວຍຕ້ອງກວດເບິ່ງວ່າມີພະນັກງານພັກແລ້ວຈັກຄົນ (ແລ້ວແຕ່ຄວາມເໝາະສົມຂອງແຕ່ລະໜ່ວຍງານ)
5. ຄະນະພະແນກພະຍາບານ ຫຼື ຫົວໜ້າຂະແໜງພະຍາບານ ຕິດຕາມກວດກາການເຮັດວຽກຂອງພະຍາບານໃນແຕ່ລະຝຽນ ແລະວຽກບໍລິຫານພະຍາບານ
6. ຖ້າມີຄວາມຈຳເປັນພັກ/ປ່ຽນຝຽນເຮັດວຽກໃຫ້ຂຽນໃບສະເໜີໂດຍແລກຝຽນເຮັດວຽກດ້ວຍກັນເອງ ແລະລາຍງານໃຫ້ພະແນກພະຍາບານຮູ້
7. ໜ້າທີ່ຄວາມຮັບຜິດຊອບຂອງແຕ່ລະຝຽນເຮັດວຽກ:
   - ການຕຽມມອບ-ຮັບວຽກ
   - ຝຽນທີ່ຈະເຂົ້າຮັບວຽກ ຕ້ອງມາກ່ອນເວລາຢ່າງໜ້ອຍ 15 ນາທີ
   - ກວດນັບເຄື່ອງ, ຄົນເຈັບ ແລະ ເອກະສານແລ້ວຈຶ່ງ ມອບ-ຮັບຝຽນເຮັດວຽກ

- ກ່ອນເຂົ້າວຽກໃຫ້ກຽມເຄື່ອງໃຊ້ທີ່ຈຳເປັນສ່ວນຕົວໃຫ້ພ້ອມ ບໍ່ອະນຸຍາດໃຫ້ອອກໄປກິນເຂົ້ານອກໂຮງໝໍ
- ໃຫ້ຈັດອາຫານ ສຳລັບຝຽນເຮັດວຽກເດິກ (ຕົວຢ່າງ 22:00ໂມງ -06:00 ໂມງເຊົ້າ)
- ກໍລະນີເຮັດວຽກຝຽນແລງ-ຝຽນເດິກຖ້າມີການຂຶ້ນຫ້ອງຮຽນ, ການເຂົ້າຮ່ວມປະຊຸມໃຫ້ເປັນຄວາມຮັບຜິດຊອບສ່ວນບຸກຄົນ ແລະ ເສັຍສະລະເວລາສ່ວນຕົວ ເພື່ອຜົນປະໂຫຍດສ່ວນລວມ
- ຜູ້ທີ່ຈະອອກເຮັດວຽກຝຽນແລງ ແລະ ເຂົ້າເຮັດວຽກຝຽນເດິກຕ້ອງເຂົ້ານານອນໃນສະຖານທີ່ທາງໂຮງໝໍຈັດໄວ້ໃຫ້
- ຫ້າມດື່ມຂອງມຶນເມົາກ່ອນເຂົ້າເຮັດວຽກ

## ການຈັດລະບົບເຮັດວຽກຂອງພະຍາບານ

**ໜ້າວຽກຂອງແຕ່ລະທີມ**

**ທີມເຊົ້າ 8ມ.00 - 16ມ.00**

ພະຍາບານທີມເຊົ້າປະຕິບັດວຽກງານດັ່ງນີ້: ເວລາ 7: 45 ຮັບມອບວຽກ ແລະໄປກວດເບິ່ງ ສະພາບຄົນເຈັບຮ່ວມກັນ ທຸກໆເຊົ້າ (Nursing grand rounds).

**ຫົວໜ້າທີມງານພະຍາບານຮັບຜິດຊອບ** (In charge Nurse)

- ນຳພາທີມງານກວດຢ້ຽມຄົນເຈັບພາຍໃນໜ່ວຍງານທີ່ຕົນເອງຮັບຜິດຊອບ
- ມອບໝາຍກໍລະນີຄົນເຈັບໃຫ້ແຕ່ລະບຸກຄົນຮັບຜິດຊອບ
- ໄປກວດຢ້ຽມຄົນເຈັບຮ່ວມກັບທ່ານໝໍ
- ນຳເອົາແຜນການປິ່ນປົວຂອງທ່ານໝໍມາຈັດຕັ້ງປະຕິບັດ
- ອະທິບາຍການຮັກສາປິ່ນປົວ ແລະ ການພະຍາບານທີ່ຄົນເຈັບຈະໄດ້ຮັບເປັນກໍລະນີ
- ປະສານງານກັບຂະແໜງອື່ນທີ່ກ່ຽວຂ້ອງ
- ແນະນຳຄົນເຈັບ ແລະ ພີ່ນ້ອງກ່ຽວກັບລະບົບການປິ່ນປົວຂອງໂຮງໝໍ



**ພະຍາບານຜູ້ໃຫ້ການດູແລ ແລະ ຮັກສາສະພາບແວດລ້ອມ**

- ຈັດສະພາບແວດລ້ອມ ແລະ ຄວາມເປັນລະບຽບຮຽບຮ້ອຍໃນຫ້ອງຄົນເຈັບ
- ເອົາອາການກ່ຽວແກ່ຊີວິດ ແລະບັນທຶກລົງເອກະສານ
- ປະເມີນສະພາບຂອງຄົນເຈັບ
- ດູແລອະນາໄມສ່ວນບຸກຄົນທີ່ຕົນເອງຮັບຜິດຊອບ ເຊັ່ນ: ອາບນ້ຳເຊັດໂຕ, ສະຫົວ, ປ່ຽນເສື້ອຜ້າ ເປັນຕົ້ນ
- ປະຕິບັດຕາມແຜນການປິ່ນປົວ ເຊັ່ນ: ຈັດຢາໃຫ້ຢາຖືກຕາມເວລາ, ຕິດຕາມການສົ່ງສານນ້ຳ ( IV fluid ), ລ້າງບາດ, ການເກັບຕົວຢ່າງ (Specimens) ເຊັ່ນ: ເຈາະເລືອດ, ອາຈົມ (Stool), ຍ່ຽວ (Urine), ຂີ້ກະເທີ ( sputum ), ຕິດຕາມຜົນການກວດວິເຄາະຕ່າງໆ.
- ສົ່ງຄົນເຈັບໄປຊອ່ງລັງສີ (X- ray), ໄປກວດເອໂກ (ultrasound) ແລະ ແທກຄື້ນກະແສຫົວໃຈ (E C G).
- ຕຽມຄົນເຈັບກ່ອນຜ່າຕັດ ແລະ ສົ່ງເຂົ້າຫ້ອງຜ່າຕັດ.
- ຮັບຄົນເຈັບເຂົ້າໃໝ່
- ຍ້າຍຄົນເຈັບໄປຕຶກອື່ນ
- ນຳສົ່ງຄົນເຈັບໄປໂຮງໝໍອື່ນ
- ບັນທຶກການພະຍາບານຕາມເວລາໂດຍລະບຸອາການຄົນເຈັບ, ຖືກຕ້ອງ ແລະ ຄົບຖ້ວນ
- ມອບໝາຍຄົນເຈັບ ໃຫ້ນັກສຶກສາ ແລະ ຕິດຕາມຊຸກຍູ້ເວລາຝຶກປະຕິບັດ
- ກວດເອກະສານກ່ອນຄົນເຈັບກັບບ້ານໃຫ້ຄົບຖ້ວນ
- ໃຫ້ຄຳແນະນຳຄົນເຈັບກ່ອນກັບບ້ານ
- ເວລາ 15ມ.30 ຕຽມມອບ-ຮັບວຽກ.

**ທີມແລງ 16ມ.00 - 24ມ.00**

ພະຍາບານທີມແລງປະຕິບັດວຽກງານດັ່ງນີ້: ເວລາ 15: 30 ຮັບ-ມອບວຽກ ແລະໄປກວດເບິ່ງສະພາບຄົນເຈັບຮ່ວມກັນ.

**ຫົວໜ້າທີມຮັບຜິດຊອບ**

- ນຳພາທີມງານກວດຢ້ຽມຄົນເຈັບພາຍໃນຂະແໜງທີ່ຕົນເອງຮັບຜິດຊອບ
- ມອບໝາຍວຽກໃຫ້ແຕ່ລະບຸກຄົນຮັບຜິດຊອບ
- ປະເມີນສະພາບຂອງຄົນເຈັບ
- ນຳເອົາແຜນການປິ່ນປົວຂອງທ່ານໝໍມາປະຕິບັດພ້ອມທັງຂຽນໃສ່ປຶ້ມບັນທຶກຂອງພະຍາບານ
- ອະທິບາຍແຜນການປິ່ນປົວ ແລະ ການພະຍາບານທີ່ຄົນເຈັບຈະໄດ້ຮັບ
- ປະສານງານກັບໜ່ວຍງານອື່ນທີ່ກ່ຽວຂ້ອງ
- ແນະນຳຄົນເຈັບ ແລະ ພີ່ນ້ອງກ່ຽວກັບກົດລະບຽບຂອງໂຮງໝໍ

**ພະຍາບານຜູ້ໃຫ້ການດູແລ ແລະ ຮັກສາສະພາບແວດລ້ອມ**

- ຈັດສະພາບແວດລ້ອມ ແລະຄວາມເປັນລະບຽບຮຽບຮ້ອຍໃນຫ້ອງຄົນເຈັບ
- ເອົາອາການກ່ຽວແກ່ຊີວິດ ແລະບັນທຶກລົງເອກະສານ
- ປະເມີນສະພາບຄົນເຈັບ
- ດູແລອະນາໄມສ່ວນບຸກຄົນທີ່ຕົນເອງຮັບຜິດຊອບ ເຊັ່ນ: ອາບນ້ຳ ເຊັດໂຕ, ສະຫົວ, ປ່ຽນເສື້ອຜ້າ ເປັນຕົ້ນ
- ປະຕິບັດຕາມແຜນການປິ່ນປົວ ເຊັ່ນ: ຈັດຢາ, ໃຫ້ຢາຖືກຕາມເວລາ,ຕິດຕາມການສົ່ງສານນ້ຳ (IV fluid), ລ້າງບາດ, ການເກັບຕົວຢ່າງ ເຊັ່ນ: ເຈາະເລືອດ, ອາຈົມ(Stool), ຍ່ຽວ(Urine), ຂີ້ກະເທີ (sputum), ຕິດຕາມຜົນການກວດວິເຄາະຕ່າງໆ
- ສົ່ງຄົນເຈັບໄປຊ່ອງລັງສີ (X- ray), ໄປກວດເອໂກ (ultrasound) ແລະແທກຄື້ນກະແສຫົວໃຈ (E C G)



- ຕຽມຄົນເຈັບກ່ອນຜ່າຕັດ ແລະ ສົ່ງເຂົ້າຫ້ອງຜ່າຕັດ
- ຮັບຄົນເຈັບເຂົ້າໃໝ່
- ຍ້າຍຄົນເຈັບໄປຕຶກອື່ນ
- ນຳສົ່ງຄົນເຈັບໄປໂຮງໝໍອື່ນ
- ບັນທຶກການພະຍາບານຕາມເວລາໂດຍລະບຸອາການຄົນເຈັບ,ຖືກຕ້ອງ ແລະຄົບຖ້ວນ
- ມອບໝາຍຄົນເຈັບ ໃຫ້ນັກສຶກສາ ແລະ ຕິດຕາມຊຸກຍູ້ເວລາຝຶກປະຕິບັດ
- ກວດເອກະສານກ່ອນຄົນເຈັບກັບບ້ານໃຫ້ຄົບຖ້ວນ
- ໃຫ້ຄຳແນະນຳຄົນເຈັບກ່ອນກັບບ້ານ
- ຕຽມອຸປະກອນການເກັບຕົວຢ່າງ
- ເວລາ 23 ມ.30 ຕຽມມອບຮັບວຽກ.

**ທີມເດິກ 24ມ.00 - 8ມ.00**

ພະຍາບານທີມເດິກປະຕິບັດວຽກງານ ດັ່ງນີ້: ເວລາ 23: 30 ຮັບ-ມອບວຽກ ແລະໄປຢ້ຽມເບິ່ງສະພາບຄົນເຈັບຮ່ວມກັນ

**ຫົວໜ້າທີມຮັບຜິດຊອບ**

- ມອບໝາຍວຽກໃຫ້ແຕ່ລະບຸກຄົນຮັບຜິດຊອບເຮັດໜ້າທີ່ດູແລ ແລະ ໃຫ້ການພະຍາບານຄົນເຈັບ
- ປະສານງານກັບຂະແໜງອື່ນທີ່ກ່ຽວຂ້ອງ

**ພະຍາບານຜູ້ໃຫ້ການດູແລ ແລະ ຮັກສາສະພາບແວດລ້ອມ**

- ຈັດສະພາບແວດລ້ອມ ແລະ ຄວາມເປັນລະບຽບຮຽບຮ້ອຍໃນຫ້ອງຄົນເຈັບ
- ເອົາອາການກ່ຽວແກ່ຊີວິດ ແລະ ບັນທຶກລົງເອກະສານ
- ປະຕິບັດຕາມແຜນການປິ່ນປົວ ເຊັ່ນ: ຈັດຢາໃຫ້ຢາຖືກຕາມເວລາ, ຕິດຕາມການສົ່ງສານນ້ຳ ( IV fluid ), ລ້າງບາດ, ການເກັບຕົວຢ່າງ ເຊັ່ນ: ເຈາະເລືອດ, ອາຈົມ, ຍ່ຽວ, ຂີ້ກະເທີ, ຕິດຕາມຜົນ ການກວດວິເຄາະຕ່າງໆ

- ສົ່ງຄົນເຈັບໄປຊ່ອງລັງສີ (X- ray), ຊ່ອງເອໂກ ແລະແທກຄື້ນກະແສຫົວໃຈ (E C G)
- ຕຽມຄົນເຈັບກ່ອນຜ່າຕັດ ແລະ ສົ່ງເຂົ້າຫ້ອງຜ່າຕັດ
- ຮັບຄົນເຈັບເຂົ້າໃໝ່
- ຍ້າຍຄົນເຈັບໄປຕຶກອື່ນ
- ນໍາສົ່ງຄົນເຈັບໄປໂຮງໝໍອື່ນ
- ບັນທຶກການພະຍາບານຕາມເວລາໂດຍລະບຸອາການຄົນເຈັບ ຖືກຕ້ອງ ແລະ ຄົບຖ້ວນ
- ມອບໝາຍຄົນເຈັບ ໃຫ້ນັກສຶກສາ ແລະ ຕິດຕາມ ຊຸກຍູ້ເວລາຝຶກປະຕິບັດ
- ກວດເອກະສານກ່ອນຄົນເຈັບກັບບ້ານໃຫ້ຄົບຖ້ວນ
- ໃຫ້ຄໍາແນະນໍາຄົນເຈັບກ່ອນກັບບ້ານ
- ສົ່ງສະຖິຕິຄົນເຈັບໃຫ້ພະແນກບໍລິຫານການແພດ
- ເວລາ 7: 30 - 8ມ.00 ຕຽມມອບຮັບວຽກ.

## ໜ້າທີ່ລະອຽດ

I. **ໜ້າທີ່ໂດຍລະອຽດຂອງຫົວໜ້າທີມພະຍາບານ** (In charge Nurse)
- ກວດເບິ່ງລາຍງານປະຈໍາວັນຂອງພະຍາບານເພື່ອໃຫ້ຮູ້ຈໍານວນຄົນເຈັບປັດຈຸບັນ, ລາຍຊື່ຂອງຄົນເຈັບເຂົ້າໃໝ່, ຄົນເຈັບອອກ, ເສຍຊີວິດ, ຕຽມກວດ, ຕຽມຜ່າຕັດ ແລະ ອື່ນໆ
- ກວດເບິ່ງລາຍງານຄົນເຈັບແຕ່ລະຄົນຕັ້ງແຕ່ຄໍາສັ່ງການປິ່ນປົວຈົນເຖິງລາຍງານຜົນການພະຍາບານຕາມອາການຂອງຄົນເຈັບ ເມື່ອພົບສິ່ງບົກຜ່ອງຕ້ອງມອບໃຫ້ຜູ້ປະຈໍາການປັດຈຸບັນແກ້ໄຂໃຫ້ຮຽບຮ້ອຍກ່ອນການຮັບວຽກ
- ກວດເບິ່ງຄົນເຈັບເປັນລາຍບຸກຄົນຮ່ວມກັບຫົວໜ້າທີມປັດຈຸບັນເພື່ອກວດກາຈໍານວນ ແລະ ເບິ່ງອາການຄົນເຈັບລວມທັງການສົ່ງວຽກ
- ກວດຢ້ຽມຄົນເຈັບທຸກ 2-3 ຊົ່ວໂມງ
- ກວດເບິ່ງຄວາມສະອາດ ແລະ ຄວາມຮຽບຮ້ອຍໂດຍທົ່ວໄປຂອງຫ້ອງຄົນເຈັບ



- ກວດເບິ່ງປື້ມນັບເຄື່ອງ ແລະ ປຶ້ມອື່ນໆທີ່ຈໍາເປັນທຸກເຫຼັ້ມ ເຊັ່ນ: ປຶ້ມລາຍງານເຫດການຂອງຕຶກ
- ຮັບວຽກ ແລະ ກວດສອບແຜນການພະຍາບານຕາມ Kardex
- ປະຊຸມກຸ່ມເພື່ອປຶກສາຫາລືບັນຫາການພະຍາບານ ແລະ ວາງແຜນການພະຍາບານພາຍໃນຝຽນຮ່ວມກັນ
- ມອບໝາຍໜ້າທີ່ຮັບຜິດຊອບແກ່ຜູ້ຮ່ວມງານແຕ່ລະຄົນ
- ໄປຢ້ຽມຄົນເຈັບ (ຕາມ Round) ກັບທ່ານໝໍທີ່ເບິ່ງແຍງຄົນເຈັບແຕ່ລະຄົນ
- ແຍກເອກະສານ ຫຼື ໃບພະຍາບານຄົນເຈັບໜັກທີ່ຕ້ອງການການຮັກສາເປັນພິເສດຕ່າງຫາກ ເພື່ອສະດວກແກ່ການບັນທຶກລະດັບອຸນນະພູມ, ຊີບພະຈອນ, ການຫາຍໃຈ ແລະ ຄວາມດັນເລືອດເປັນໄລຍະ ແລະ ບັນທຶກອາການປ່ຽນແປງຕ່າງໆ ໄວ້ຕະຫລອດເວລາ
- ຢ້ຽມຄົນເຈັບ ແລະ ວາງແຜນການພະຍາບານຮ່ວມກັບສະມາຊິກໃນທີມ
- ກວດຢ້ຽມສານນໍ້າ ແລະ ວາງແຜນການໄດ້ຮັບສານນໍ້າຂອງຄົນເຈັບຮ່ວມກັບພະຍາບານຜູ້ໃຫ້ຢາຄົນເຈັບ (Medication Nurse)
- ກວດກາເອກກະສານຄົນເຈັບ, ຮັບຄໍາສັ່ງລົງໃນ Kardex, ຂຽນໃບສັ່ງຕ່າງໆຄື: ໃບສັ່ງຢາ, ໃບສັ່ງກວດ, ໃບສັ່ງການຮັກສາທີ່ບໍ່ແມ່ນຢາເພື່ອໃຫ້ສະມາຊິກປະຕິບັດ ເຊັ່ນ: ສວນຖ່າຍ, ຮັກສາ/ຖອດ ທໍ່ອາຫານ (retain/remove NG tube), ຮັກສາ/ຖອດທໍ່ສວນຍ່ຽວ, ການບົວລະບັດບາດແຜພື້ນຊາມ (Perineum-care) (ຕັດພື້ນຊາມໄລຍະເກີດລູກ), ການເຊັດໂຕ ເປັນຕົ້ນ. ຂຽນປ້າຍຕິດຖົງນໍ້າທະເລໃຫ້ຄົບຖ້ວນ ແລະຖືກຕ້ອງ, ຂຽນໃບໃຫ້ຢາທີ່ເລີ່ມໃໝ່, ປະລິມານຢາທີ່ເລີ່ມຕົ້ນ (Start dose), ປະລິມານຢາທີ່ໃຊ້ເທື່ອດຽວ (Single dose), ຢາທີ່ສັ່ງເປັນຊຸດ (course) ເຊັ່ນ: Chloroquine ແລະ ຢາຂ້າພະຍາດເປັນຕົ້ນ
- ໃຫ້ການພະຍາບານຄົນເຈັບແຕ່ລະຄົນທີ່ຈໍາເປັນ
- ເບິ່ງແຍງໃຫ້ຄົນເຈັບໄດ້ຮັບຢາ ແລະໃຫ້ຢາຕາມເວລາ
- ຕິດຕາມ/ປະເມີນຜົນການໄດ້ຮັບຢາ ແລະການໄດ້ຮັບການປິ່ນປົວຂອງຄົນເຈັບ

- ບັນທຶກລາຍງານຄົນເຈັບທຸກຄົນໃນຄວາມຮັບຜິດຊອບ (Complete Chart) ບັນທຶກການປະເມີນຜົນຂອງການປິ່ນປົວທາງການພະຍາບານໃນໃບພະຍາບານ (chart ແລະ ສະຫຼຸບ chart)
- ຮັບຜິດຊອບໃນການລາຍງານທ່ານໝໍໃນກໍລະນີຄົນເຈັບມີບັນຫາ
- ອໍານວຍຄວາມສະດວກ/ຕອບສະໜອງຄວາມຕ້ອງການ ແລະແກ້ໄຂບັນຫາຂອງຄົນເຈັບ ແລະພີ່ນ້ອງຄົນເຈັບ
- ປະສານງານກັບທ່ານໝໍ, ພະຍາບານ, ຄົນເຈັບ, ພີ່ນ້ອງຄົນເຈັບ ແລະພະນັກງານອື່ນໆ
- ໃຫ້ຄໍາແນະນໍາແກ່ສະມາຊິກໃນທີມຍາມ ແລະ ຜູ້ມາຝຶກປະຕິບັດທາງດ້ານການພະຍາບານ
- ແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນໃນຂະນະປະຕິບັດງານ ຖ້າເກີນຄວາມສາມາດໃຫ້ລາຍງານ ແລະ ປຶກສາຕາມສາຍງານ
- ຊ່ວຍເຮັດໃບອອກໂຮງໝໍ(Discharge)ຄົນເຈັບ ແລະຮັບຄົນເຈັບຖ້າມີເວລາ ແລະ ຮັບຜິດຊອບໃນການລາຍງານທ່ານໝໍ
- ຮັບຜິດຊອບໃນການປະເມີນບັນຫາ ແລະພາວະສຸຂະພາບ ຂອງຄົນເຈັບທີ່ເຂົ້າໃໝ່ທຸກກໍລະນີລວມທັງວາງແຜນໃຫ້ການພະຍາບານ
- ຮັບຜິດຊອບໃນການສົ່ງຍາມຄົນເຈັບໃຫ້ແກ່ຕຶກທີ່ຄົນເຈັບຍ້າຍໄປ
- ໃຫ້ຄວາມຮູ້/ສຸຂະສຶກສາ ລວມທັງຂໍ້ມູນດ້ານສຸຂະພາບທີ່ຈໍາເປັນແກ່ຄົນເຈັບ ແລະ ພີ່ນ້ອງຄົນເຈັບ
- ວາງແຜນການຄົນເຈັບອອກໂຮງໝໍ
- ຕິດຕາມຜົນການເຮັດວຽກຂອງຜູ້ຮ່ວມງານແຕ່ລະຄົນຕາມທີ່ໄດ້ຮັບມອບໝາຍ
- ກວດເບິ່ງເຄື່ອງໃຊ້, ຢາ ແລະອຸປະກອນຕ່າງໆໃຫ້ມີໃຊ້ຢ່າງພຽງພໍໃນການປະຕິບັດວຽກງານຂອງຝຽນວຽກຕໍ່ໄປ
- ກວດເບິ່ງເຄື່ອງໃຊ້ຕ່າງໆ ທີ່ນໍາໄປໃຊ້ໃນຝຽນວຽກຕົນເອງເພື່ອກວດເບິ່ງຄວາມສະອາດ ແລະ ເກັບໄວ້ໃຫ້ຮຽບຮ້ອຍ



- ຊ່ວຍເຫຼືອຜູ້ຮ່ວມງານໃນການເຮັດວຽກອື່ນໆ ພາຍໃນຕຶກເທົ່າທີ່ຈະເຮັດໄດ້ເມື່ອຕົນເອງວ່າງ
- ປະຊຸມກຸ່ມເພື່ອສະຫຼຸບຜົນການພະຍາບານພາຍໃນຝຽນ ລວມທັງບັນຫາ ແລະ ອຸປະສັກຕ່າງໆ
- ສະຫຼຸບລວມຍອດຄົນເຈັບ/ສະຫຼຸບ
- ບັນທຶກລົງໃນ ລາຍງານປະຈໍາວັນຂອງພະຍາບານ ແລະ ຕຽມສິ່ງວຽກໃຫ້ແກ່ຫົວໜ້າທີມໃນຝຽນຕໍ່ໄປກວດກາເອກະສານ ເຊັ່ນ: ໃບບັນທຶກພະຍາບານ, ໃບອຸນຫະພູມ ແລະໃບສັ່ງກວດຕ່າງໆກ່ອນມອບສິ່ງວຽກ.

## II. ໜ້າທີ່ຂອງ ພະຍາບານໃນການໃຫ້ຢາ (Medication Nurse)

- ຮັບວຽກ-ສົ່ງວຽກ.
- ຈັດຢາ-ຢາຍຢາ ຕາມເວລາໂດຍໃຊ້ຫຼັກການ 6 ຖືກ, ກວດກາຢາໃຫ້ມີຄົບ ແລະ ພຽງພໍຕະຫຼອດ 24 ຊົ່ວໂມງ
- ຮັບຢາຈາກຄົນເຈັບ ກວດສອບຄວາມຖືກຕ້ອງຄົບຖ້ວນ ແລະອະທິບາຍຂໍ້ມູນລາຍລະອຽດແກ່ຄົນເຈັບ ແລະ ພີ່ນ້ອງຄົນເຈັບກ່ຽວກັບຢາທີ່ຄົນເຈັບຊື້ມາໃຫ້
- ຕິດປ້າຍສານນໍ້າ (tag fluid) ໃສ່ຖົງສານນໍ້າໃຫ້ຖືກຕ້ອງ
- ຈັດຢາ - ແຈກຢາ ປະລິມານເລີ່ມຕົ້ນ (start dose), ປະລິມານຢາໃຊ້ເທື່ອດຽວ (single dose), ຢາ/ ສານນໍ້າ ທີ່ເລີ່ມໃໝ່ໂດຍໃຊ້ຫຼັກການ 6 ຖືກ
- ເລີ່ມຢາຄົນເຈັບເຂົ້າໃໝ່
- ລາຍງານຫົວໜ້າທີມ (In charge), ທ່ານໝໍໃນກໍລະນີທີ່ບໍ່ມີຢາ/ຢາຂາດສາງ (stock)
- ອະທິບາຍ/ບອກ ກ່ຽວກັບຢາແຕ່ລະຊະນິດທີ່ຄົນເຈັບກິນໄດ້
- ຕິດຕາມການໃຫ້ສານນໍ້າ ແລະ ວາງແຜນການໄດ້ຮັບສານນໍ້າຂອງຄົນເຈັບລວມທັງກວດຢັ້ງມ ແລະ ປ່ຽນຊຸດສາຍສານນໍ້າຕາມກໍານົດເວລາ
- ລົງບັນທຶກການໃຫ້ຢາຄົນເຈັບໃນໃບບັນທຶກການໃຫ້ຢາ ພ້ອມລົງຊື່ຜູ້ໃຫ້ທຸກຄັ້ງ

- ລົງບັນທຶກການໄດ້ຮັບຢາຂອງຄົນເຈັບໃນໃບບັນທຶກການພະຍາບານ ລວມທັງຜົນທີ່ຄົນເຈັບໄດ້ຮັບຈາກການໃຫ້ຢາ
- ຮັບຜິດຊອບໃນການຄືນຢາໃຫ້ຄົນເຈັບໃນກໍລະນີຄົນເຈັບກັບບ້ານ/ເສຍຊີວິດ, ຍ້າຍຕຶກ, ທ່ານໝໍງົດຢາ ຫຼື ປ່ຽນຢາໃໝ່
- ລາຍງານຫົວໜ້າທີມງານ ເມື່ອຄົນເຈັບມີບັນຫາ
- ໃຫ້ຄວາມຮູ້/ສຸຂະສຶກສາລວມທັງຂໍ້ມູນດ້ານສຸຂະພາບທີ່ຈຳເປັນແກ່ຄົນເຈັບ ແລະ ພີ່ນ້ອງຄົນເຈັບ
- ຊ່ວຍເຫຼືອຜູ້ຮ່ວມງານອື່ນໃນການປະຕິບັດວຽກງານ ຫຼື ໃຫ້ການບໍລິການທາງການພະຍາບານເມື່ອມີເວລາວ່າງ
- ປະຕິບັດວຽກງານ ກິດຈະກຳອື່ນໆ ທີ່ໄດ້ຮັບມອບໝາຍ

## III. ໜ້າທີ່ຂອງພະຍາບານຜູ້ໃຫ້ການປິ່ນປົວ (Treatment Nurse)

- ວັດແທກອາການຊີວິດຄົນເຈັບຕາມເວລາ ແລະບັນທຶກລົງໃນໃບບັນທຶກອຸນນະພູມ, ລາຍງານຫົວໜ້າທີມ ແລະພະຍາບານຜູ້ໃຫ້ຢາ ເມື່ອຄົນເຈັບມີໄຂ້ , ຄວາມດັນເລືອດຜິດປົກກະຕິ, ອຸນຫະພູມລຸດລົງໃນຄົນເຈັບທີ່ມີໄຂ້ ແລະ ແທກຄວາມດັນເລືອດຊ້ຳໃນກໍລະນີຜິດປົກກະຕິ
- ບັນທຶກນ້ຳເຂົ້າ-ນ້ຳອອກ, ເຫນ້ຳຍ່ຽວ ແລະນ້ຳລະບາຍ (drian) ຕ່າງໆ
- ເຮັດໃບຄົນເຈັບອອກໂຮງໝໍກໍລະນີມີຄົນເຈັບກັບບ້ານໃນຍາມແລງ ແລະ ເດິກ
- ຮັບ ແລະສົ່ງຄົນເຈັບ ຍ້າຍຕຶກ, ກັບບ້ານ, ຍ້າຍໂຮງໝໍ
- ເກັບຕົວຢ່າງກວດ, ເຈາະເລືອດຄົນເຈັບ ແລະ ສົ່ງກວດລວມທັງຕິດຕາມຜົນກວດ
- ປະຕິບັດການພະຍາບານ ຕ່າງໆແກ່ຄົນເຈັບ ເຊັ່ນ: ລ້າງບາດ, ສວນຖ່າຍ, ຮັກສາ/ຖອດ ທໍ່ອາຫານ, ຮັກ ສາ/ຖອດທໍ່ສວນຍ່ຽວ, ການບົວລະບັດບາດແຜພື້ນຊາມ (Perineum care) (ຕັດພື້ນຊາມໄລຍະເກີດລູກ), ການເຊັດໂຕ ເປັນຕົ້ນ
- ຕຽມ ແລະ ສົ່ງຄົນເຈັບເຂົ້າຫ້ອງຜ່າຕັດ
- ສົ່ງຄົນເຈັບໄປຫ້ອງຊ່ອງໄຟຟ້າ X - ray



- ປ່ຽນເຄື່ອງນຸ່ງ, ຜ້າປູບ່ອນລວມທັງເຮັດຄວາມສະອາດຫ້ອງຄົນເຈັບ
- ເກັບມ້ຽນຜ້າປູບ່ອນຂອງຄົນເຈັບທີ່ກັບບ້ານ ແລະທຳຄວາມສະອາດ
- ຈັດຕຽມອຸປະກອນການພະຍາບານ (supplies)ໄວ້ໃຫ້ພ້ອມ ແລະພຽງພໍທີ່ຈະໃຊ້ໃນການປະຕິບັດການພະຍາບານຕະຫຼອດ 24 ຊົ່ວໂມງລວມທັງຮັບຜິດຊອບເບິ່ງແຍງ ແລະຮັກສາກວດສອບວັນໝົດອາຍຸ ແລະອະເຊື້ອອຸປະກອນເຄື່ອງມືຄືນ (Re sterile) ເຊັ່ນ: ການຈັດຕຽມໃຫ້ມີສຳລີ, ຜ້າແສທີ່ສະອາດປາສະຈາກເຊື້ອໃຫ້ພຽງພໍໃຊ້ຈົນເຖິງມື້ຕໍ່ໄປ. ກວດກາ ແລະໜື້ງອຸປະກອນທີ່ຈຳເປັນໃນການຮັກສາການພະຍາບານອື່ນໆ ເຊັ່ນ: ໄມ້ງັດລີ້ນ, ຊຸດສວນຍ່ຽວ, ກັບໃສ່ສຳລີ, ແປງຄີບ, ກະປຸກໃສ່ ແປງຄີບ (forcep) ແລະ ອື່ນໆ
- ກວດເຊັກ ແລະຂຽນລາຍການໃນການເບີກອຸປະກອນ ເຄື່ອງໃຊ້ທີ່ຕ້ອງການໃຊ້ສຳລັບມື້ຕໍ່ໄປລວມທັງການນັບອຸປະກອນເຄື່ອງໃຊ້ໃຫ້ຄົບຕາມຈຳນວນເຊັ່ນ: ເອກກະສານທາງການພະຍາບານຕ່າງໆ, ໃບສັ່ງຢາ, ໃບສັ່ງກວດ, ສານນ້ຳ, ຖົງມື,ຖົງໃສ່ຂີ້ເຫຍື້ອ, ແຟບ, ສະບູ, ນ້ຳດື່ມໃຫ້ຄົນເຈັບຫ້ອງພິເສດ, ເຈ້ຍເຊັດມື, ສຳລີ, ຜ້າແສ, ນ້ຳມັນມີ້ນ, ເຫຼົ້າ 70%, ນ້ຳຢາຂ້າເຊື້ອ Dettol, dakin, Acetone ແລະ ອື່ນໆ ເປັນຕົ້ນ
- ລາຍງານອຸປະກອນທີ່ເປ່ເພໃຫ້ຫົວໜ້າທີມ, ຫົວໜ້າພະຍາບານຂະແໜງ ແລະ ຮອງຫົວໜ້າພະຍາບານຂະແໜງ ແລະ ຂຽນໃບສະເໜີສ້ອມແປງ
- ເບິ່ງແຍງຄວາມສະອາດເຄື່ອງມືເຄື່ອງໃຊ້ໃນການພະຍາບານ ເຊັ່ນ: ບາຫລອດເຄື່ອງແທກຄວາມດັນເລືອດ, ກ້ອງຟັງ, ລໍ້ຈ່າຍຢາ, ລໍ້ລ້າງບາດ, ລໍ້ເຈາະເລືອດ, ລໍ້ນອນຄົນເຈັບ, ລໍ້ນັ່ງຄົນເຈັບ, ຫຼັກນ້ຳທະເລ, ງົ່ງຊາຍ, ງົ່ງຍິງ,ເອກກະສານ ແລະ ລໍ້ໃສ່ເອກກະສານ ເປັນຕົ້ນ
- ເບິ່ງແຍງ ແລະ ຮັບຜິດຊອບຫ້ອງຕ່າງໆໃຫ້ສະອາດ ແລະ ເປັນລະບຽບຮຽບຮ້ອຍຕະຫລອດເວລາ
- ເບິ່ງແຍງ ແລະ ຮັບຜິດຊອບຫ້ອງມ້ຽນເສື້ອຜ້າຄົນເຈັບໃຫ້ສະອາດ ເປັນລະບຽບຮຽບຮ້ອຍຕະຫຼອດເວລາ

- ເບິ່ງແຍງ ແລະ ຮັບຜິດຊອບຫ້ອງນ້ຳພະຍາບານໃຫ້ສະອາດ ແລະ ເປັນລະບຽບຮຽບຮ້ອຍຕະຫຼອດເວລາ
- ໃຫ້ຄວາມຮູ້/ສຸຂະສຶກສາລວມທັງຂໍ້ມູນດ້ານສຸຂະພາບທີ່ຈຳເປັນແກ່ຄົນເຈັບ ແລະ ພີ່ນ້ອງ
- ຊ່ວຍເຫຼືອຜູ້ຮ່ວມງານອື່ນໃນການປະຕິບັດວຽກງານ ຫຼື ການໃຫ້ການບໍລິການທາງການພະຍາບານເມື່ອມີເວລາຫວ່າງ ເຊັ່ນ: ການແປງຕຽງ, ປ່ຽນເຄື່ອງນຸ່ງຄົນເຈັບ, ຮັບຄົນເຈັບເຂົ້າໃໝ່ ແລະ ສົ່ງຄົນເຈັບໄປສ່ອງໄຟຟ້າ X-ray ເປັນຕົ້ນ
- ປະຕິບັດວຽກງານ ກິດຈະກຳອື່ນໆທີ່ໄດ້ຮັບການມອບໝາຍຈາກຫົວໜ້າພະຍາບານຕຶກ ຫຼື ຫົວໜ້າຍາມ
- ທີມເຮັດວຽກ ກິນເຂົ້າແລງ ເວລາ 17ມ.30

**ຂໍ້ແນະນຳໃນການຢັ້ງມຄົນເຈັບໃຊ້ຂະບວນການພະຍາບານ**

- ກວດຢ້ຽມຄົນເຈັບຫຼັງຈາກຮັບວຽກ
- ກວດຢ້ຽມຄົນເຈັບຢ່າງໜ້ອຍທຸກ 2 - 4 ຊົ່ວໂມງ
- ສົນທະນາກັບຄົນເຈັບໃນຂະນະກວດຢ້ຽມຄົນເຈັບ
- ມີການຕຽມຂໍ້ມູນຢ່າງດີເພື່ອໃຫ້ຄຳແນະນຳ ຫຼື ຊັກປະຫວັດອາການຂອງຄົນເຈັບ
- ມີການສັງເກດບັນຫາຂອງຄົນເຈັບໃນຂະນະທີ່ກວດຢ້ຽມຄົນເຈັບ
- ມີການຕອບສະໜອງຄວາມຕ້ອງການຂອງຄົນເຈັບໄດ້ຢ່າງທັນກັບເຫດການ ແລະ ເຕັມໃຈໃນໃນຂະນະທີ່ກວດຢ້ຽມຄົນເຈັບ
- ມີການບັນທຶກບັນຫາຂອງຄົນເຈັບໃນຂະນະທີ່ກວດຢ້ຽມຄົນເຈັບ
- ຂະນະກວດຢ້ຽມຄົນເຈັບໃຫ້ສົນທະນາກັນໃນເລື່ອງກ່ຽວກັບການປິ່ນປົວທາງການພະຍາບານເປັນສຳຄັນ
- ມີການຕິດຕາມແກ້ໄຂບັນຫາທີ່ພົບໃນເວລາທີ່ກວດຢ້ຽມຄົນເຈັບຕະຫຼອດເວລາ ແລະ ຕໍ່ເນື່ອງ
- ກວດສອບການບັນທຶກທາງການພະຍາບານໃຫ້ຖືກຕ້ອງ ແລະ ສອດຄ່ອງກັບສະຖານະການ ຫຼັງການກວດຢ້ຽມ



- ມີການບັນທຶກການກວດສອບ ການຈັດສິ່ງແວດລ້ອມໃຫ້ສະອາດ ແລະປອດພັຍ
- ມີການບັນທຶກການກວດສອບອຸປະກອນເຄື່ອງມືເຄື່ອງໃຊ້
- ນຳບັນຫາທີ່ພົບໃນເວລາທີ່ກວດຢ້ຽມມາວາງແຜນແກ້ໄຂ, ປັບປຸງ ແລະປະຕິບັດ
- ສັງເກດການປະຕິບັດການພະຍາບານໃນເວລາກວດຢ້ຽມ

**ຂໍ້ແນະນຳໃນການສົ່ງວຽກ - ຮັບວຽກ**

- ຕຽມຂໍ້ມູນດ້ານການປິ່ນປົວ, ການພະຍາບານ, ບຸກຄະລາກອນ ແລະ ຕຽມເຄື່ອງມືເຄື່ອງໃຊ້ໄວ້ຢ່າງຖືກຕ້ອງສົມບູນ ເຊັ່ນ: ຢາຊະນິດໃດທີ່ຂາດສາງ, ອຸປະກອນຊະນິດໃດທີ່ບໍ່ມີໃຊ້ ຫຼື ມີບໍ່ພຽງພໍສຳລັບໃຫ້ການບໍລິການແກ່ຄົນເຈັບ ເພື່ອໃຫ້ຫົວໜ້າທີມ ຫຼື ຫົວໜ້າພະຍາບານໄດ້ຈັດການແກ້ໄຂ
- ກວດຢ້ຽມຄົນເຈັບ, ກວດສອບ ການບັນທຶກການພະຍາບານກ່ອນສົ່ງວຽກ
- ກວດຢ້ຽມຄົນເຈັບ, ບຸກຄະລາກອນ, ສິ່ງແວດລ້ອມ ແລະ ເຄື່ອງມືເຄື່ອງໃຊ້ອື່ນໆ ກ່ອນສົ່ງວຽກ
- ລາຍງານໃຫ້ຈຸຍາມຕໍ່ໄປໃຫ້ເຂົ້າໃຈເຖິງການປິ່ນປົວທາງການພະຍາບານທີ່ໄດ້ປະຕິບັດໄປແລ້ວ ຜົນຂອງການປະຕິບັດ ແລະການປິ່ນປົວທາງການພະຍາບານທີ່ຈະຕ້ອງປະຕິບັດຕໍ່ໄປຢ່າງຖືກຕ້ອງ ແລະ ສົມບູນ
- ລາຍງານບັນຫາທາງການພະຍາບານ/ບົ່ງມະຕິທາງການພະຍາບານຕາມແນວທາງຂອງຂະບວນການພະຍາບານ
- ຜູ້ສົ່ງວຽກ ແລະຜູ້ຮັບວຽກຕ້ອງໄດ້ກວດສອບການບັນທຶກທາງການພະຍາບານຮ່ວມກັນ
- ຜູ້ສົ່ງວຽກ ແລະ ຜູ້ຮັບວຽກໄດ້ກວດຢ້ຽມຄົນເຈັບຮ່ວມກັນ
- ຜູ້ສົ່ງວຽກ ແລະ ຜູ້ຮັບວຽກໄດ້ກວດຢ້ຽມເຄື່ອງມືເຄື່ອງໃຊ້, ສິ່ງແວດລ້ອມ ແລະ ຊັບພະຍາກອນຮ່ວມກັນ
- ມີການອະທິບາຍ, ຊັກຖາມຂໍ້ມູນ ແລະ ປຶກສາແນວທາງການປະຕິບັດການພະຍາບານຮ່ວມກັນລະຫວ່າງຜູ້ສົ່ງວຽກ ແລະ ຜູ້ຮັບວຽກ
- ໃຊ້ເວລາໃນການສົ່ງວຽກ-ຮັບວຽກ ປະມານ 30 - 40 ນາທີ.

## ຂໍ້ແນະນຳໃນການຮັບຄົນເຈັບເຂົ້ານອນ

- ຕຽມຕຽງ ແລະເຄື່ອງນຸ່ງຄົນເຈັບຕາມຄວາມເໝາະສົມກັບຄົນເຈັບ
- ຕຽມເອກະສານໃບພະຍາບານ, kardex, ຫູ້ກຫ້ອຍ, ປ້າຍສຳລັບຕິດວັນທີເລີ່ມໃສ່ສານນ້ຳ
- ຕຽມເອກກະສານໃນການໃຫ້ຄຳແນະນຳສຳລັບຄົນເຈັບ ແລະພີ່ນ້ອງກ່ຽວກັບການໃຫ້ການບໍລິການຂອງໂຮງໝໍ
- ຮັບຄົນເຈັບລົງລົ້ນຳສົ່ງ, ແນະນຳຕົວເອງ ແລະ ເອີ້ນຊື່ຄົນເຈັບ
- ຊັກປະຫວັດການເຈັບເປັນ ແລະ ເອົາອາການຊີວິດ
- ໃຫ້ຄຳແນະນຳກ່ຽວກັບສະຖານທີ່ ແລະ ກົດລະບຽບຂອງໂຮງໝໍ
- ໃຫ້ຄຳແນະນຳກ່ຽວກັບອາຫານ ແລະ ເວລາໃຫ້ຢາແກ່ຄົນເຈັບ
- ໃຫ້ຢາຕາມຄຳສັ່ງການປິ່ນປົວຂອງທ່ານໝໍ, ເຈາະເລືອດ ຫຼື ຕິດຕາມຜົນກວດຕ່າງໆ
- ລາຍງານທ່ານໝໍຕາມນະໂຍບາຍຂອງໂຮງໝໍ
- ຕື່ມຂໍ້ມູນຄົນເຈັບໃນໃບພະຍາບານ
- ຂຽນ Kardex ແລະ ວາງແຜນການພະຍາບານ
- ບັນທຶກສະຖິຕິຄົນເຈັບເຂົ້າໃໝ່
- ບັນທຶກທາງການພະຍາບານ ແລະ ບັນທຶກໃບອາການຊີວິດ
- ຕິດຕາມປະເມີນຜົນການພະຍາບານ

## ຂໍ້ແນະນຳໃນການຈັດຢາ

1. ຈັດຢາຈາກ Kardek
2. ຈັດຢາຕາມເວລາ
3. ບັນທຶກການໄດ້ຮັບຢາຂອງຄົນເຈັບລົງໃນໃບບັນທຶກການໃຫ້ຢາ
4. ວາງແຜນການໄດ້ຮັບສານນ້ຳຂອງຄົນເຈັບ



## ຂໍ້ແນະນຳໃນການນຳທ່ານໝໍໄປກວດຢ້ຽມຄົນເຈັບ Visit

- ຕຽມເອກກະສານຄົນເຈັບ, ຜົນກວດວິເຄາະ, ຜົນຊ່ອງໄຟຟ້າໃຫ້ຖືກຕ້ອງກົງກັບຄົນເຈັບ
- ຕຽມໃບສັ່ງຢາ,ໃບສັ່ງກວດຕ່າງໆ ໃຫ້ມີພຽງພໍ ແລະ ພ້ອມໃຊ້ໃນລົ້ເອກະສານ
- ຕຽມເຫຼົ້າຢາຂ້າເຊື້ອມີ 70% ສຳລັບເຮັດອະນາໄມມື
- ຕຽມອຸປະກອນໃນການກວດຕ່າງໆ ເຊັ່ນ: ໄຟສາຍ, ເຫຼັກງັດລີ້ນ , ກ້ອງຟັງ
- ມີມະນຸດສຳພັນກັບທ່ານໝໍ, ຄົນເຈັບ ແລະພີ່ນ້ອງໃນລະຫວ່າງທີ່ທ່ານໝໍກວດຢ້ຽມຄົນເຈັບ,ໃຫ້ຄຳແນະນຳ/ສຸຂະສຶກສາແກ່ຄົນເຈັບ ແລະ ພີ່ນ້ອງ
- ຊ່ວຍທ່ານໝໍໃນການກວດຕ່າງໆ ເຊັ່ນ: ການກວດພາຍໃນຮູຄົນເຈັບ, ການຈັດທ່າຄົນເຈັບ, ການປົກປິດຄົນເຈັບໃນລະຫວ່າງການກວດ
- ຊ່ວຍທ່ານໝໍໃນການຂຽນໃບສັ່ງຢາ ແລະໃບສັ່ງກວດຕ່າງໆ
- ອະທິບາຍ ຕອບຄຳຖາມ,ໃຫ້ຄຳແນະນຳໃນການປະຕິບັດຕົວແກ່ຄົນເຈັບ ແລະ ພີ່ນ້ອງ

## ຂໍ້ແນະນຳໃນການຮັບຄຳສັ່ງການປິ່ນປົວລົງໃນ Kardex

- ຂຽນວັນທີທີ່ສັ່ງການປິ່ນປົວໃນຊ່ອງວັນທີ (Date)
- ຢາທີ່ເປັນຄຳສັ່ງຕໍ່ເນື່ອງໃຫ້ຂຽນຄຳສັ່ງໃນຊ່ອງຢາຕໍ່ເນື່ອງ(Medications) ຂຽນເວລາທີ່ໃຫ້ຢາໃນຊ່ອງເວລາ(Time) ຂຽນເຄື່ອງໝາຍ ຊ່ອງເວລາດ້ວຍສີເມື່ອຈັດຢາແລ້ວ
- ເມື່ອທ່ານໝໍສັ່ງຢຸດຢາໃຫ້ໃຊ້ສີຂີດລົງຊື່ຢານັ້ນລວມທັງເວລາທີ່ໃຫ້ຢາດ້ວຍ
- ຂຽນຄຳສັ່ງການປິ່ນປົວຄັ້ງດຽວໃນຊ່ອງຄຳສັ່ງຄັ້ງດຽວທັງຊະນິດທີ່ເປັນຢາ, ສານນ້ຳ, ການໃຫ້ເລືອດ (Blood Transfusion) ລວມທັງການປິ່ນປົວອື່ນໆ ເຊັ່ນ: ໃສ່ສາຍທໍ່ອາຫານ (NG Tube), ການສວນຖ່າຍ, ການຮັກສາທໍ່ສວນຍ່ຽວ, ຕຽມຜ່າຕັດ ເປັນຕົ້ນ, ຂຽນເວລາທີ່ປະຕິບັດ/ເວລາຕໍ່ສານນ້ຳໃນຊ່ອງເວລາທີ່ປະຕິບັດ (Time)
- ການງົດອາຫານ NPO ໃຫ້ຂຽນໃນຊ່ອງອາຫານ (Diet) ດ້ວຍສີດຳ

- ເມື່ອຮັບຄົນເຈັບເຂົ້າໃໝ່ໃຫ້ຂຽນປະຫວັດການເຈັບເປັນລົງໃນຊ່ອງປະຫວັດການເຈັບເປັນ (History) ແລະ ຂຽນແຜນການພະຍາບານລົງໃນຊ່ອງແຜນການພະຍາບານ(Nursing Care Plan) ເຊັ່ນ: ອາການຊີວິດທຸກ 4 ຊົ່ວໂມງ(Vital Signs Q4h (ລະບຸ ເວລາ) , ບັນທຶກນໍ້າເຂົ້າ-ນໍ້າອອກທຸກ 8 ຊມ(Q 8h) (ລະບຸເວລາ), ປ່ຽນສານນໍ້າ ແລະສາຍນໍ້າ (ລະບຸເວລາ) ເປັນຕົ້ນ.
- ຂີດເຄື່ອງໝາຍ ☐ ທີ່ເວລາດ້ວຍສີດໍາເມື່ອປະຕິບັດແລ້ວ
- ຫົວໜ້າທີມກວດສອບຄວາມຖືກຕ້ອງຂອງ Kardex ທຸກວັນ, ລຶບເຄື່ອງໝາຍ ☐ ທີ່ເວລາເພື່ອຕຽມໃຫ້ Medication nurse ຈັດຢາຕໍ່ໄປ
- ກວດສອບປະເມີນ ແລະປັບປ່ຽນແຜນການພະຍາບານທຸກວັນ
- ເມື່ອຄົນເຈັບຍ້າຍຕຶກໃຫ້ສົ່ງ Kardex ໄປພ້ອມກັບຄົນເຈັບ
- ເມື່ອຄົນເຈັບກັບບ້ານໃຫ້ເກັບ ໃບ Kardex ໄວ້ທີ່ຕຶກຢ່າງໜ້ອຍ 3 ວັນ ເພື່ອໃຊ້ປະໂຫຍດໃນການກວດສອບຍ້ອນຫຼັງ.



# ເອກະສານຊ້ອນທ້າຍ ທີ 2

# ລະບົບການເຮັດວຽກ 12 ຊົ່ວໂມງ/ມື້

ຄວາມໝາຍ: ການເຮັດວຽກ 12 ຊົ່ວໂມງຕໍ່ມື້ໝາຍເຖິງພະຍາບານຜູ້ໜຶ່ງ ເຮັດວຽກດູແລຄົນເຈັບ 12 ຊົ່ວໂມງຕໍ່ມື້ ເທົ່າກັບ 60 ຊົ່ວໂມງຕໍ່ອາທິດ,ມີຊົ່ວໂມງເກີນຈາກປົກກະຕິ (40ຊົ່ວໂມງຕໍ່ອາທິດ) ຈໍານວນດັ່ງກ່າວໃຫ້ຄິດໄລ່ເປັນເງິນເຮັດວຽກປະຈໍາການນອກໂມງລັດຖະການ

1. ໃນໜຶ່ງມື້ ມີ 24 ຊົ່ວໂມງ ຊຶ່ງແບ່ງເວລາການເຮັດວຽກອອກເປັນ 2 ຝຽນຄື:
   - ຝຽນເຊົ້າ (Day shift: D) ຕັ້ງແຕ່ເວລາ 08ມ.00 - 20ມ.00.
   - ຝຽນແລງ (Evening shift: E) ຕັ້ງແຕ່ເວລາ 20ມ.00 - 08ມ.00.
2. ການຈັດຕາຕະລາງເຮັດວຽກ:
   - ໃນ ອາທິດໜຶ່ງມີວັນພັກ 2 ມື້ ອາດຈະໄດ້ພັກຕິດຕໍ່ກັນ ຫຼື ບໍ່ຕິດກັນກໍ່ໄດ້
   - ຝຽນເຊົ້າເຮັດວຽກຕິດກັນບໍ່ໃຫ້ເກີນ 3 ມື້
   - ຝຽນແລງເຮັດວຽກຕິດກັນບໍ່ໃຫ້ເກີນ 2-3 ມື້ແລະຫ້າມຢູ່ຕໍ່ຝຽນເຊົ້າ
3. ຕາຕະລາງເຮັດວຽກ ຕ້ອງອອກທຸກໆ ວັນທີ 25 ຂອງເດືອນ
4. ກໍລະນີຂໍລາພັກຕ້ອງຂໍກ່ອນວັນທີ 15 ຂອງເດືອນ ແລະຫົວໜ້າໜ່ວຍຕ້ອງກວດເບິ່ງວ່າມີພະນັກງານພັກແລ້ວຈັກຄົນ (ແລ້ວແຕ່ຄວາມເໝາະສົມຂອງແຕ່ລະໜ່ວຍງານ)
5. ຄະນະພະແນກພະຍາບານ ຫຼື ຫົວໜ້າຂະແໜງພະຍາບານ ຕິດຕາມກວດກາການເຮັດວຽກຂອງພະຍາບານໃນແຕ່ລະຝຽນ ແລະວຽກບໍລິຫານພະຍາບານ
6. ຖ້າມີຄວາມຈໍາເປັນພັກ/ປ່ຽນຝຽນເຮັດວຽກໃຫ້ຂຽນໃບສະເໜີໂດຍແລກຝຽນເຮັດວຽກດ້ວຍກັນເອງ ແລະ ລາຍງານໃຫ້ພະແນກພະຍາບານຮູ້
7. ໜ້າທີ່ຄວາມຮັບຜິດຊອບຂອງແຕ່ລະຝຽນເຮັດວຽກ:
   - ການຕຽມມອບ-ຮັບວຽກ
   - ຝຽນທີ່ຈະເຂົ້າຮັບວຽກ ຕ້ອງມາກ່ອນເວລາຢ່າງໜ້ອຍ 15 ນາທີ
   - ກວດນັບເຄື່ອງ,ຄົນເຈັບແລະເອກະສານແລ້ວຈຶ່ງ ມອບຮັບຝຽນເຮັດວຽກ
   - ກ່ອນເຂົ້າເຮັດວຽກໃຫ້ກຽມເຄື່ອງໃຊ້ທີ່ຈໍາເປັນສ່ວນຕົວໃຫ້ພ້ອມ ບໍ່ອະນຸຍາດໃຫ້ອອກໄປກິນເຂົ້ານອກໂຮງໝໍ

- ໃຫ້ຈັດອາຫານ ສຳລັບຟຽນເຮັດວຽກແລງ (ຕົວຢ່າງ 22:00ໂມງ-06:00 ໂມງເຊົ້າ)
- ກໍລະນີເຮັດວຽກຟຽນແລງຖ້າມີການຂຶ້ນຫ້ອງຮຽນ, ການເຂົ້າຮ່ວມປະຊຸມ ໃຫ້ເປັນຄວາມຮັບຜິດຊອບສ່ວນບຸກຄົນ ແລະເສຍສະລະ ເວລາສ່ວນຕົວ ເພື່ອຜົນປະໂຫຍດສ່ວນລວມ
- ຫ້າມດື່ມຂອງມຶນເມົາກ່ອນເຂົ້າເຮັດວຽກ

## ການຈັດລະບົບເຮັດວຽກຂອງພະຍາບານ

### ໜ້າວຽກຂອງແຕ່ລະທີມ

**ທີມເຊົ້າ 8ມ.00 - 20ມ.00**

ພະຍາບານທີມເຊົ້າປະຕິບັດວຽກງານດັ່ງນີ້: ເວລາ 7: 45 ຮັບມອບວຽກ ແລະໄປກວດເບິ່ງສະພາບຄົນເຈັບຮ່ວມກັນທຸກໆເຊົ້າ.

### ໜ້າທີ່ຂອງຫົວໜ້າທີມງານພະຍາບານ

- ນຳພາທີມງານກວດຢ້ຽມຄົນເຈັບພາຍໃນໜ່ວຍງານ ທີ່ຕົນເອງຮັບຜິດຊອບ
- ມອບໝາຍກໍລະນີຄົນເຈັບໃຫ້ແຕ່ລະບຸກຄົນຮັບຜິດຊອບ
- ໄປກວດຢ້ຽມຄົນເຈັບຮ່ວມກັບທ່ານໝໍ
- ນຳເອົາແຜນການປິ່ນປົວຂອງທ່ານໝໍມາຈັດຕັ້ງປະຕິບັດ
- ອະທິບາຍການຮັກສາປິ່ນປົວ ແລະ ການພະຍາບານທີ່ຄົນເຈັບຈະໄດ້ຮັບເປັນກໍລະນີ
- ປະສານງານກັບຂະແໜງອື່ນທີ່ກ່ຽວຂ້ອງ
- ແນະນຳຄົນເຈັບ ແລະ ພີ່ນ້ອງກ່ຽວກັບລະບົບການປິ່ນປົວຂອງໂຮງໝໍ.



### ໜ້າທີ່ຂອງພະຍາບານຜູ້ໃຫ້ການດູແລ ແລະ ຮັກສາສະພາບແວດລ້ອມ

- ຈັດສະພາບແວດລ້ອມແລະຄວາມເປັນ ລະບຽບຮຽບຮ້ອຍໃນຫ້ອງຄົນເຈັບ
- ເອົາອາການກ່ຽວແກ່ຊີວິດແລະບັນທຶກລົງເອກະສານ
- ປະເມີນສະພາບຂອງຄົນເຈັບ
- ດູແລອະນາໄມສ່ວນບຸກຄົນທີ່ຕົນເອງຮັບຜິດຊອບ ເຊັ່ນ: ອາບນໍ້າ ເຊັດໂຕ, ສະຫົວ, ປ່ຽນເສື້ອຜ້າ ເປັນຕົ້ນ.
- ປະຕິບັດຕາມແຜນການປິ່ນປົວ ເຊັ່ນ: ຈັດຢາ ,ໃຫ້ຢາຖືກຕາມເວລາ, ຕິດຕາມການສິ່ງສານນໍ້າ (IV fluid), ການລ້າງບາດ, ການເກັບຕົວຢ່າງ ເຊັ່ນ: ເຈາະເລືອດ, ອາຈົມ (Stool), ຍ່ຽວ(Urine), ຂີ້ກະເທີ(sputum), ຕິດຕາມຜົນການກວດວິເຄາະ ຕ່າງໆ
- ສົ່ງຄົນເຈັບໄປຊອ່ງລັງສີ (X- ray), ໄປຊ່ອງເອໂກ (ultrasound) ແລະແທກຄື້ນກະແສຫົວໃຈ (E C G)
- ຕຽມຄົນເຈັບກ່ອນຜ່າຕັດ ແລະສົ່ງເຂົ້າຫ້ອງຜ່າຕັດ
- ຮັບຄົນເຈັບເຂົ້າໃໝ່
- ຍ້າຍຄົນເຈັບໄປຕຶກອື່ນ
- ນຳສົ່ງຄົນເຈັບໄປໂຮງໝໍອື່ນ
- ບັນທຶກການພະຍາບານຕາມເວລາໂດຍລະບຸອາການຄົນເຈັບ, ຖືກຕ້ອງ ແລະຄົບຖ້ວນ
- ມອບໝາຍຄົນເຈັບ ໃຫ້ນັກສຶກສາ ແລະ ຕິດຕາມຊຸກຍູ້ເວລາຝຶກປະຕິບັດ
- ກວດເອກະສານກ່ອນຄົນເຈັບກັບບ້ານໃຫ້ຄົບຖ້ວນ
- ໃຫ້ຄຳແນະນຳຄົນເຈັບກ່ອນກັບບ້ານ
- ເວລາ 19ມ.30 ຕຽມມອບວຽກ

**ທີມແລງ 20ມ.00 - 08ມ.00**

ພະຍາບານທີມແລງປະຕິບັດວຽກງານດັ່ງນີ້: ເວລາ 19: 30 ຮັບມອບວຽກ ແລະໄປກວດເບິ່ງສະພາບຄົນເຈັບຮ່ວມກັນ

**ໜ້າທີ່ຂອງຫົວໜ້າທີມຮັບຜິດຊອບ**

- ນຳພາທີມງານກວດຢ້ຽມຄົນເຈັບພາຍໃນຂະແໜງ ທີ່ຕົນເອງ ຮັບຜິດຊອບ
- ມອບໝາຍວຽກໃຫ້ແຕ່ລະບຸກຄົນຮັບຜິດຊອບ
- ປະເມີນສະພາບຂອງຄົນເຈັບ
- ນຳເອົາແຜນການປິ່ນປົວຂອງທ່ານໝໍ ມາປະຕິບັດພ້ອມທັງຂຽນໃສ່ປື້ມບັນທຶກຂອງພະຍາບານ
- ອະທິບາຍແຜນການປິ່ນປົວ ແລະ ການພະຍາບານທີ່ຄົນເຈັບຈະໄດ້ຮັບ
- ປະສານງານກັບໜ່ວຍງານອື່ນທີ່ກ່ຽວຂ້ອງ
- ແນະນຳຄົນເຈັບ ແລະ ພີ່ນ້ອງກ່ຽວກັບກົດລະບຽບຂອງໂຮງໝໍ

**ໜ້າທີ່ຂອງພະຍາບານຜູ້ໃຫ້ການດູແລ ແລະ ຮັກສາສະພາບແວດລ້ອມ**

- ຈັດສະພາບແວດລ້ອມ ແລະຄວາມເປັນລະບຽບຮຽບຮ້ອຍໃນຫ້ອງຄົນເຈັບ
- ເອົາອາການກ່ຽວແກ່ຊີວິດ ແລະບັນທຶກລົງເອກະສານ
- ປະເມີນສະພາບຄົນເຈັບ
- ດູແລອະນາໄມສ່ວນບຸກຄົນທີ່ຕົນເອງຮັບຜິດຊອບ ເຊັ່ນ: ອາບນ້ຳ ເຊັດໂຕ, ສະຫົວ, ປ່ຽນເສື້ອຜ້າ ເປັນຕົ້ນ
- ປະຕິບັດຕາມແຜນການປິ່ນປົວ ເຊັ່ນ: ຈັດຢາ,ໃຫ້ຢາຖືກ ຕາມເວລາ, ຕິດຕາມການສິ່ງສານນ້ຳ, ການລ້າງບາດ, ການເກັບຕົວຢ່າງເຊັ່ນ: ເຈາະເລືອດ, ອາຈົມ, ຍ່ຽວ, ຂີ້ກະເທີ ຕິດຕາມຜົນການກວດວິເຄາະ ຕ່າງໆ
- ສົ່ງຄົນເຈັບໄປຊ່ອງລັງສີ (X- ray), ໄປຊ່ອງເອໂກ (ultrasound) ແລະແທກຄື້ນກະແສຫົວໃຈ (E C G).
- ຕຽມຄົນເຈັບກ່ອນຜ່າຕັດ ແລະສົ່ງເຂົ້າຫ້ອງຜ່າຕັດ
- ຮັບຄົນເຈັບເຂົ້າໃໝ່



- ຍ້າຍຄົນເຈັບໄປຕຶກອື່ນ
- ນຳສົ່ງຄົນເຈັບໄປໂຮງໝໍອື່ນ
- ບັນທຶກການພະຍາບານຕາມເວລາໂດຍລະບຸອາການຄົນເຈັບ,ຖືກຕ້ອງ ແລະຄົບຖ້ວນ
- ມອບໝາຍຄົນເຈັບ ໃຫ້ນັກສຶກສາ ແລະຕິດຕາມຊຸກຍູ້ເວລາຝຶກປະຕິບັດ
- ກວດເອກະສານກ່ອນຄົນເຈັບກັບບ້ານໃຫ້ຄົບຖ້ວນ
- ໃຫ້ຄຳແນະນຳຄົນເຈັບກ່ອນກັບບ້ານ
- ຕຽມອຸປະກອນການເກັບຕົວຢ່າງ
- ສົ່ງສະຖິຕິຄົນເຈັບໃຫ້ພະແນກບໍລິຫານການແພດ
- ເວລາ 07 ມ.30 ຕຽມມອບວຽກ.

## ໜ້າທີ່ລະອຽດ

I. **ໜ້າທີ່ໂດຍລະອຽດຂອງຫົວໜ້າທີມພະຍາບານ** (In charge Nurse).

- ກວດເບິ່ງລາຍງານປະຈຳວັນຂອງພະຍາບານ (Daily Nurse report) ເພື່ອໃຫ້ຮູ້ຈຳນວນຄົນເຈັບປະຈຸບັນ, ລາຍຊື່ຂອງຄົນເຈັບເຂົ້າໃໝ່,ຄົນເຈັບອອກ, ເສັຍຊີວິດ, ຕຽມກວດ, ຕຽມຜ່າຕັດ ແລະອື່ນໆ
- ກວດເບິ່ງການລາຍງານຄົນເຈັບແຕ່ລະຄົນຕັ້ງແຕ່ຄຳສັ່ງການປິ່ນປົວຈົນເຖິງລາຍງານຜົນການພະຍາບານຕາມອາການຂອງຄົນເຈັບ ເມື່ອພົບສິ່ງບົກຜ່ອງຕ້ອງມອບໃຫ້ຜູ້ປະຈຳການປະຈຸບັນແກ້ໄຂໃຫ້ຮຽບຮ້ອຍກ່ອນການຮັບວຽກ
- ກວດເບິ່ງຄົນເຈັບເປັນລາຍບຸກຄົນຮ່ວມກັບຫົວໜ້າທີມຄົນປະຈຸບັນເພື່ອກວດກາຈຳນວນ ແລະເບິ່ງອາການຄົນເຈັບລວມທັງການສົ່ງວຽກ
- ກວດຢ້ຽມຄົນເຈັບທຸກ 2-3 ຊົ່ວໂມງ
- ກວດເບິ່ງຄວາມສະອາດ ແລະຄວາມຮຽບຮ້ອຍໂດຍທົ່ວໄປຂອງຫ້ອງຄົນເຈັບ
- ກວດເບິ່ງປື້ມນັບເຄື່ອງ ແລະປື້ມອື່ນໆທີ່ຈຳເປັນທຸກເຫຼັ້ມ ເຊັ່ນ: ປື້ມລາຍງານເຫດການຂອງຕຶກ
- ຮັບວຽກ ແລະ ກວດສອບແຜນການພະຍາບານຕາມ Kardex

- ປະຊຸມກຸ່ມເພື່ອປຶກສາຫາລືບັນຫາການພະຍາບານ ແລະວາງແຜນການພະຍາບານພາຍໃນຝຽນວຽກຮ່ວມກັນ
- ມອບໝາຍໜ້າທີ່ຮັບຜິດຊອບແກ່ຜູ້ຮ່ວມງານແຕ່ລະຄົນ
- ໄປຢ້ຽມຄົນເຈັບກັບທ່ານໝໍທີ່ເບິ່ງແຍງຄົນເຈັບແຕ່ລະຄົນ
- ແຍກເອກະສານ ຫຼືໃບພະຍາບານຄົນເຈັບໜັກທີ່ຕ້ອງການການຮັກສາເປັນພິເສດຕ່າງຫາກ ເພື່ອສະດວກແກ່ການບັນທຶກລະດັບອຸນຫະພູມ, ຊີພະຈອນ ການຫາຍໃຈແລະ ຄວາມດັນເລືອດເປັນໄລຍະ ແລະ ບັນທຶກອາການປ່ຽນແປງຕ່າງໆ ໄວ້ຕະຫລອດເວລາ
- ຢ້ຽມຄົນເຈັບ ແລະວາງແຜນການພະຍາບານຮ່ວມກັບສະມາຊິກໃນທີມ
- ກວດຢ້ຽມສານນ້ຳ ແລະວາງແຜນການໄດ້ຮັບສານນ້ຳ ຂອງຄົນເຈັບຮ່ວມກັບພະຍາບານຜູ້ໃຫ້ຢາຄົນເຈັບ (Medication Nurse)
- ກວດກາເອກກະສານຄົນເຈັບ, ຮັບຄຳສັ່ງລົງໃນ Kardex, ຂຽນໃບສັ່ງຕ່າງໆ ຄື:ໃບສັ່ງຢາ, ໃບສັ່ງກວດ, ໃບສັ່ງການຮັກສາທີ່ບໍ່ແມ່ນຢາເພື່ອໃຫ້ສະມາຊິກປະຕິບັດ ເຊັ່ນ: ສວນຖ່າຍ(Water enema), ຮັກສາ/ຖອດ ທໍ່ອາຫານ), ຮັກສາ/ຖອດທໍ່ສວນຍ່ຽວ, ການບົວລະບັດບາດແຜພື້ນຊາມ (Perineum care)(ຕັດພື້ນຊາມໄລຍະເກີດລູກ), ການເຊັດໂຕ ເປັນຕົ້ນ. ຂຽນປ້າຍຕິດຖົງນ້ຳທະເລໃຫ້ຄົບຖ້ວນ ແລະຖືກຕ້ອງ, ຂຽນໃບໃຫ້ຢາທີ່ເລີ່ມໃໝ່, ປະລິມານຢາທີ່ໃຫ້ເລີ່ມຕົ້ນ (Start dose), ປະລິມານຢາທີ່ໃຊ້ຄັ້ງດຽວ (Single dose), ຢາທີ່ໃຫ້ເປັນຊຸດ (course) ເຊັ່ນ: Chloroquine ແລະຢາຂ້າພະຍາດ ເປັນຕົ້ນ
- ໃຫ້ການພະຍາບານຄົນເຈັບແຕ່ລະຄົນທີ່ຈຳເປັນ
- ເບິ່ງແຍງໃຫ້ຄົນເຈັບໄດ້ຮັບຢາ ແລະໃຫ້ຢາຕາມເວລາ
- ຕິດຕາມ/ປະເມີນຜົນການໄດ້ຮັບຢາ ແລະການໄດ້ຮັບການປິ່ນປົວຂອງຄົນເຈັບ
- ບັນທຶກລາຍງານຄົນເຈັບທຸກຄົນໃນຄວາມຮັບຜິດຊອບ ແລະຕື່ມຂໍ້ມູນໃນແບບຟອມບັນທຶກການປະເມີນຜົນຂອງການປິ່ນປົວທາງການພະຍາບານໃນໃບພະຍາບານ ແລະສະຫຼຸບໃບພະຍາບານ



- ຮັບຜິດຊອບໃນການລາຍງານທ່ານໝໍໃນກໍລະນີຄົນເຈັບມີບັນຫາ
- ອຳນວຍຄວາມສະດວກ/ຕອບສະໜອງຄວາມຕ້ອງການ, ແກ້ໄຂບັນຫາຂອງຄົນເຈັບ ແລະພີ່ນ້ອງຄົນເຈັບ
- ປະສານງານກັບທ່ານໝໍ, ພະຍາບານ, ຄົນເຈັບ, ພີ່ນ້ອງຄົນເຈັບ ແລະພະນັກງານອື່ນໆ
- ໃຫ້ຄຳແນະນຳແກ່ສະມາຊິກໃນທີມ ແລະຜູ້ມາຝຶກປະຕິບັດທາງດ້ານການພະຍາບານ
- ແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນໃນຂະນະປະຕິບັດງານຖ້າເກີນຄວາມສາມາດໃຫ້ລາຍງານ ແລະ ປຶກສາຕາມສາຍງານ
- ຊ່ວຍເຮັດໃບອອກໂຮງໝໍຄົນເຈັບ, ຮັບຄົນເຈັບຖ້າມີເວລາ ແລະ ຮັບຜິດຊອບໃນການລາຍງານທ່ານໝໍ
- ຮັບຜິດຊອບໃນການປະເມີນບັນຫາ ແລະພາວະສຸຂະພາບ ຂອງຄົນເຈັບທີ່ເຂົ້າໃໝ່ທຸກກໍລະນີລວມທັງວາງແຜນໃຫ້ການພະຍາບານ
- ຮັບຜິດຊອບໃນການມອບສິ່ງວຽກຄົນເຈັບໃຫ້ແກ່ຕຶກທີ່ຄົນເຈັບຍ້າຍໄປ
- ໃຫ້ຄວາມຮູ້/ສຸຂະສຶກສາ ລວມທັງຂໍ້ມູນດ້ານສຸຂະພາບທີ່ຈຳເປັນແກ່ຄົນເຈັບ ແລະພີ່ນ້ອງຄົນເຈັບ
- ວາງແຜນການຄົນເຈັບອອກໂຮງໝໍ
- ຕິດຕາມຜົນການເຮັດວຽກຂອງຜູ້ຮ່ວມງານແຕ່ລະຄົນຕາມທີ່ໄດ້ຮັບມອບໝາຍ
- ກວດເບິ່ງເຄື່ອງໃຊ້, ຢາ ແລະອຸປະກອນຕ່າງໆໃຫ້ມີໃຊ້ຢ່າງພຽງພໍໃນການປະຕິບັດວຽກງານຂອງຝຽນວຽກຕໍ່ໄປ
- ກວດເບິ່ງເຄື່ອງໃຊ້ຕ່າງໆທີ່ນຳໄປໃຊ້ໃນຝຽນເພື່ອກວດເບິ່ງຄວາມສະອາດ ແລະເກັບໄວ້ໃຫ້ຮຽບຮ້ອຍ
- ຊ່ວຍເຫຼືອຜູ້ຮ່ວມງານໃນການເຮັດວຽກອື່ນໆ ພາຍໃນຕຶກເທົ່າທີ່ຈະເຮັດໄດ້ເມື່ອຕົນເອງວ່າງ
- ປະຊຸມກຸ່ມເພື່ອສະຫຼຸບຜົນການພະຍາບານພາຍໃນຝຽນລວມທັງບັນຫາ ແລະອຸປະສັກຕ່າງໆ

- ສະຫຼຸບລວມຍອດຄົນເຈັບ / ສະຫຼຸບ
- ບັນທຶກລົງໃນ ລາຍງານປະຈຳວັນຂອງ ແລະຕຽມສິ່ງວຽກໃຫ້ແກ່ຫົວໜ້າທີມ ໃນຝຽນຕໍ່ໄປກວດກາເອກະສານ ເຊັ່ນ: ໃບບັນທຶກພະຍາບານ, ໃບອຸນຫະພູມ ແລະໃບສັ່ງກວດຕ່າງໆ ກ່ອນມອບສົ່ງວຽກ.

## II. ໜ້າທີ່ຂອງ ພະຍາບານໃນການໃຫ້ຢາ (Medication Nurse)

- ຮັບ-ສົ່ງວຽກ.
- ຈັດຢາ-ຢາຍຢາ ຕາມເວລາໂດຍໃຊ້ຫຼັກການ 6 ຖືກ, ກວດກາຢາໃຫ້ມີຄົບ ແລະພຽງພໍຕະຫຼອດ 24 ຊົ່ວໂມງ
- ຮັບຢາຈາກຄົນເຈັບ ກວດສອບຄວາມຖືກຕ້ອງຄົບຖ້ວນ ແລະອະທິບາຍໃຫ້ຂໍ້ມູນລາຍລະອຽດແກ່ຄົນເຈັບ ແລະພີ່ນ້ອງຄົນເຈັບກ່ຽວກັບຢາທີ່ຄົນເຈັບຊື້ມາໃຫ້
- ຕິດປ້າຍສານນໍ້າ (tag fluid) ໃສ່ຖົງສານນໍ້າໃຫ້ຖືກຕ້ອງ
- ຈັດຢາ - ແຈກປະລິມານຢາເລີ່ມຕົ້ນ (start dose), ປະລິມານຢາໃຊ້ເທື່ອດຽວ (single dose), ຢາ/ສານນໍ້າທີ່ເລີ່ມຕົ້ນໂດຍໃຊ້ຫຼັກການ 6 ຖືກ
- ເລີ່ມຢາຄົນເຈັບເຂົ້າໃໝ່
- ລາຍງານຫົວໜ້າທີມ, ທ່ານໝໍໃນກໍລະນີທີ່ບໍ່ມີຢາ/ຢາຂາດສາງ
- ອະທິບາຍ/ບອກ ກ່ຽວກັບຢາແຕ່ລະຊະນິດທີ່ຄົນເຈັບກິນໄດ້
- ຕິດຕາມການໃຫ້ສານນໍ້າ ແລະວາງແຜນການໄດ້ຮັບສານນໍ້າຂອງຄົນເຈັບລວມທັງກວດຢັ້ງມ ແລະປ່ຽນຊຸດສາຍສານນໍ້າ (set IV fluid) ຕາມກຳນົດເວລາ
- ລົງບັນທຶກການໃຫ້ຢາຄົນເຈັບໃນໃບບັນທຶກການໃຫ້ຢາພ້ອມລົງຊື່ຜູ້ໃຫ້ທຸກຄັ້ງ
- ລົງບັນທຶກການໄດ້ຮັບຢາຂອງຄົນເຈັບໃນໃບບັນທຶກການພະຍາບານລວມທັງຜົນທີ່ຄົນເຈັບໄດ້ຮັບຈາກການໃຫ້ຢາ
- ຮັບຜິດຊອບໃນການຄືນຢາໃຫ້ຄົນເຈັບກໍລະນີຄົນເຈັບກັບບ້ານ/ເສຍຊີວິດ, ຍ້າຍຕຶກ, ທ່ານໝໍງົດຢາ ຫຼື ປ່ຽນຢາໃໝ່
- ລາຍງານຫົວໜ້າທີມງານເມື່ອຄົນເຈັບມີບັນຫາ



- ໃຫ້ຄວາມຮູ້/ສຸຂະສຶກສາລວມທັງຂໍ້ມູນດ້ານສຸຂະພາບທີ່ຈຳເປັນແກ່ຄົນເຈັບ ແລະພີ່ນ້ອງຄົນເຈັບ
- ຊ່ວຍເຫຼືອຜູ້ຮ່ວມງານອື່ນໃນການປະຕິບັດວຽກງານ ຫຼື ໃຫ້ການບໍລິການທາງການພະຍາບານເມື່ອມີເວລາວ່າງ
- ປະຕິບັດວຽກງານ ກິດຈະກຳອື່ນໆ ທີ່ໄດ້ຮັບມອບໝາຍ.

## III. ໜ້າທີ່ຂອງພະຍາບານຜູ້ໃຫ້ການປິ່ນປົວ (Treatment Nurse)

- ວັດແທກອາການຊີວິດຄົນເຈັບຕາມເວລາ ແລະບັນທຶກລົງໃນໃບບັນທຶກອຸນນະພູມ ລາຍງານຫົວໜ້າທີມ ແລະພະຍາບານຜູ້ໃຫ້ຢາເມື່ອຄົນເຈັບມີໄຂ້, ຄວາມດັນເລືອດຜິດປົກກະຕິ, ອຸນຫະພູມຫລຸດລົດໃນຄົນເຈັບທີ່ມີໄຂ້ ແລະແທກຄວາມດັນເລືອດຊໍ້າໃນກໍລະນີຜິດປົກກະຕິ
- ບັນທຶກນໍ້າເຂົ້າ-ນໍ້າອອກ, ນໍ້າຍ່ຽວ ແລະນໍ້າຈາກທໍ່ລະບາຍ (drain) ຕ່າງໆ
- ເຮັດໃບຄົນເຈັບອອກໂຮງໝໍກໍລະນີມີຄົນເຈັບກັບບ້ານໃນຍາມແລງ ແລະເດິກ
- ຮັບ ແລະ ສົ່ງຄົນເຈັບ ຍ້າຍຕຶກ, ກັບບ້ານ ແລະ ຍ້າຍໂຮງໝໍ
- ເກັບຕົວຢ່າງກວດ,ເຈາະເລືອດຄົນເຈັບ ແລະສົ່ງກວດລວມທັງຕິດຕາມຜົນກວດ
- ປະຕິບັດການພະຍາບານ ຕ່າງໆແກ່ຄົນເຈັບ ເຊັ່ນ: ລ້າງບາດ, ລ້າງທ້ອງ ຫຼື ສວນຖ່າຍ, ຮັກສາ/ຖອດ ທໍ່ອາຫານ, ຮັກສາ/ຖອດທໍ່ສວນຍ່ຽວ, ບົວລະບັດບາດແຜພື້ນຊາມ (ຕັດພື້ນຊາມໄລຍະເກີດລູກ) ການເຊັດໂຕ ເປັນຕົ້ນ
- ຕຽມ ແລະສົ່ງຄົນເຈັບເຂົ້າຫ້ອງຜ່າຕັດ
- ສົ່ງຄົນເຈັບໄປຫ້ອງຊ່ອງໄຟຟ້າ X - ray
- ປ່ຽນເຄື່ອງນຸ່ງ, ຜ້າປູບ່ອນລວມທັງເຮັດຄວາມສະອາດຫ້ອງຄົນເຈັບ
- ເກັບມ້ຽນຜ້າປູບ່ອນຂອງຄົນເຈັບທີ່ກັບບ້ານ ແລະທຳຄວາມສະອາດ
- ຈັດຕຽມອຸປະກອນການພະຍາບານໄວ້ໃຫ້ພ້ອມ ແລະພຽງພໍທີ່ຈະໃຊ້ໃນການປະຕິບັດການພະຍາບານຕະຫຼອດ 24 ຊົ່ວໂມງລວມທັງຮັບຜິດຊອບເບິ່ງແຍງ ແລະຮັກສາກວດສອບວັນໝົດອາຍຸ ແລະອະເຊື້ອອຸປະກອນເຄື່ອງມືຄືນ (Re sterile) ເຊັ່ນ: ການຈັດຕຽມໃຫ້ມີສຳລີ, ຜ້າແສທີ່ສະອາດປາສະຈາກເຊື້ອໃຫ້

ພຽງພໍໃຊ້ຈົນເຖິງມື້ຕໍ່ໄປ. ກວດກາ ແລະໜື້ງອຸປະກອນທີ່ຈຳເປັນໃນການຮັກສາການພະຍາບານອື່ນໆ ເຊັ່ນ: ໄມ້ງັດລີ້ນ, ຊຸດສວນຍ່ຽວ, ກັບໃສ່ສຳລີ, ແປງຄີບ, ກະປຸກໃສ່ ແປງຄີບ( forcep) ແລະອື່ນໆ

- ກວດເຊັກ ແລະຂຽນລາຍການໃນການເບີກອຸປະກອນ ເຄື່ອງໃຊ້ທີ່ຕ້ອງການໃຊ້ສຳລັບມື້ຕໍ່ໄປລວມທັງການນັບຂອງໃຫ້ຄົບຕາມຈຳນວນ ເຊັ່ນ: ເອກກະສານການພະຍາບານຕ່າງໆ,ໃບສັ່ງຢາ,ໃບສັ່ງກວດ, ສານນໍ້າ,ຖົງມື ,ຖົງໃສ່ຂີ້ເຫຍື້ອ, ແຟບ, ສະບູ, ນໍ້າດື່ມໃຫ້ຄົນເຈັບຫ້ອງພິເສດ, ເຈັ້ຍເຊັດມື, ສຳລີ, ຜ້າແສ, ນໍ້າມັນມີ່ນ, ເຫຼົ້າ 70%, ນໍ້າຢາຂ້າເຊື້ອຕ່າງໆ (Dettol, dakin, Acetone) ແລະອື່ນໆເປັນຕົ້ນ.
- ລາຍງານອຸປະກອນທີ່ເປ່ເພໃຫ້ຫົວໜ້າທີມ, ຫົວໜ້າພະຍາບານຂະແໜງ ແລະຮອງຫົວໜ້າພະຍາບານຂະແໜງ ແລະ ຂຽນໃບສະເໜີສ້ອມແປງ
- ເບິ່ງແຍງຄວາມສະອາດເຄື່ອງມືເຄື່ອງໃຊ້ໃນການພະຍາບານ ເຊັ່ນ: ບາຫລອດ, ເຄື່ອງແທກຄວາມດັນເລືອດ, ກ້ອງຟັງຫູ, ລໍ້ຈ່າຍຢາ, ລໍ້ລ້າງບາດ, ເຈາະເລືອດ, ລໍ້ນອນຄົນເຈັບ, ລໍ້ນັ່ງ, ຫຼັກນໍ້າທະເລ, ງຽງຊາຍ ແລະງຽງຍິງ, ເອກກະສານ ແລະລໍ້ໃສ່ເອກກະສານ ເປັນຕົ້ນ.
- ເບິ່ງແຍງ ແລະຮັບຜິດຊອບຫ້ອງຕ່າງໆໃຫ້ສະອາດ ແລະເປັນລະບຽບຮຽບຮ້ອຍຕະຫລອດເວລາ
- ເບິ່ງແຍງ ແລະຮັບຜິດຊອບຫ້ອງມ້ຽນເສື້ອຜ້າຄົນເຈັບ ແລະຕູ້ຖ້ານເກັບເສື້ອຜ້າ ໃຫ້ສະອາດ ເປັນລະບຽບຮຽບຮ້ອຍຕະຫຼອດເວລາ
- ເບິ່ງແຍງ ແລະຮັບຜິດຊອບຫ້ອງນໍ້າພະຍາບານໃຫ້ສະອາດ ແລະເປັນລະບຽບຮຽບຮ້ອຍຕະຫຼອດເວລາ
- ໃຫ້ຄວາມຮູ້/ສຸຂະສຶກສາລວມທັງຂໍ້ມູນດ້ານສຸຂະພາບທີ່ຈຳເປັນແກ່ຄົນເຈັບ ແລະພີ່ນ້ອງ
- ຊ່ວຍເຫຼືອຜູ້ຮ່ວມງານອື່ນໃນການປະຕິບັດວຽກງານ ຫຼື ການໃຫ້ການບໍລິການທາງການພະຍາບານເມື່ອມີເວລາຫວ່າງ ເຊັ່ນ: ການແປງຕຽງ, ປ່ຽນເຄື່ອງນຸ່ງຄົນເຈັບ, ຮັບຄົນເຈັບເຂົ້າໃໝ່ ແລະ ສົ່ງຄົນເຈັບໄປສ່ອງໄຟຟ້າ X-ray ເປັນ ຕົ້ນ



- ປະຕິບັດວຽກງານ ກິດຈະກຳອື່ນໆ ທີ່ໄດ້ຮັບການມອບມາຍຈາກຫົວໜ້າພະຍາບານຕຶກ ຫຼື ຫົວໜ້າທີມ
- ທີມເຮັດວຽກກິນເຂົ້າແລງເວລາ 17ມ.30

## ຂໍ້ແນະນຳໃນການຢ້ຽມຄົນເຈັບ ໃຊ້ຂະບວນການພະຍາບານ

- ກວດຢ້ຽມຄົນເຈັບຫຼັງຈາກຮັບວຽກ
- ກວດຢ້ຽມຄົນເຈັບຢ່າງໜ້ອຍທຸກ 2-4 ຊົ່ວໂມງ
- ສົນທະນາກັບຄົນເຈັບໃນຂະນະກວດຢ້ຽມຄົນເຈັບ
- ມີການຕຽມຂໍ້ມູນຢ່າງດີເພື່ອໃຫ້ຄຳແນະນຳ ຫຼື ຊັກປະຫວັດອາການຂອງຄົນເຈັບ
- ມີການສັງເກດບັນຫາຂອງຄົນເຈັບໃນຂະນະທີ່ກວດຢ້ຽມຄົນເຈັບ
- ມີການຕອບສະໜອງຄວາມຕ້ອງການຂອງຄົນເຈັບໄດ້ຢ່າງທັນກັບເຫດການ ແລະເຕັມໃຈໃນໃນຂະນະທີ່ກວດຢ້ຽມຄົນເຈັບ
- ມີການບັນທຶກບັນຫາຂອງຄົນເຈັບໃນຂະນະທີ່ກວດຢ້ຽມຄົນເຈັບ
- ຂະນະກວດຢ້ຽມຄົນເຈັບໃຫ້ສົນທະນາໃນເລື້ອງກ່ຽວກັບການພະຍາບານເປັນສຳຄັນ
- ມີການຕິດຕາມແກ້ໄຂບັນຫາທີ່ພົບໃນເວລາທີ່ກວດຢ້ຽມຄົນເຈັບຕະຫຼອດເວລາ ແລະຕໍ່ເນື່ອງ
- ກວດສອບການບັນທຶກທາງການພະຍາບານໃຫ້ຖືກຕ້ອງ ແລະສອດຄ່ອງກັບສະຖານະການຫຼັງການກວດຢ້ຽມ
- ມີການບັນທຶກການກວດສອບ, ການຈັດສິ່ງແວດລ້ອມໃຫ້ສະອາດ ແລະປອດພັຍ
- ມີການບັນທຶກການກວດສອບອຸປະກອນເຄື່ອງມືເຄື່ອງໃຊ້
- ນຳບັນຫາທີ່ພົບໃນເວລາທີ່ກວດຢ້ຽມມາວາງແຜນແກ້ໄຂປັບປຸງ ແລະປະຕິບັດ
- ສັງເກດການປະຕິບັດການການພະຍາບານໃນເວລາກວດຢ້ຽມ

## ຂໍ້ແນະນຳໃນການສົ່ງວຽກ - ຮັບວຽກ

- ຕຽມຂໍ້ມູນດ້ານການປິ່ນປົວ, ການພະຍາບານ, ບຸກຄະລາກອນ ແລະຕຽມເຄື່ອງມືເຄື່ອງໃຊ້ໄວ້ຢ່າງຖືກຕ້ອງສົມບູນ ເຊັ່ນ: ຢາຊະນິດໃດທີ່ຂາດສາງ, ອຸປະກອນຊະນິດໃດທີ່ບໍ່ມີໃຊ້ ຫຼື ມີບໍ່ພຽງພໍສຳລັບໃຫ້ການບໍລິການແກ່ຄົນເຈັບ ເພື່ອໃຫ້ຫົວໜ້າທີມ ຫຼື ຫົວໜ້າພະຍາບານໄດ້ຈັດການແກ້ໄຂ
- ກວດຢ້ຽມຄົນເຈັບ, ກວດສອບ ການບັນທຶກການພະຍາບານກ່ອນສົ່ງວຽກ
- ກວດຢ້ຽມຄົນເຈັບ, ບຸກຄະລາກອນ, ສິ່ງແວດລ້ອມ ແລະ ເຄື່ອງມືເຄື່ອງໃຊ້ອື່ນໆ ກ່ອນສົ່ງວຽກ
- ລາຍງານໃຫ້ຜຽນວຽກຕໍ່ໄປໃຫ້ເຂົ້າໃຈເຖິງການໃຫ້ການພະຍາບານທີ່ໄດ້ປະຕິບັດໄປແລ້ວ, ຜົນຂອງການປະຕິບັດ ແລະ ການໃຫ້ການພະຍາບານທີ່ຈະຕ້ອງປະຕິບັດຕໍ່ໄປຢ່າງຖືກຕ້ອງ ແລະ ສົມບູນ
- ລາຍງານບັນຫາທາງການພະຍາບານ/ການບົ່ງມະຕິທາງການພະຍາບານຕາມແນວທາງຂອງຂະບວນການພະຍາບານ
- ຜູ້ສົ່ງວຽກ ແລະ ຜູ້ຮັບວຽກຕ້ອງໄດ້ກວດສອບການບັນທຶກທາງການພະຍາບານຮ່ວມກັນ
- ຜູ້ສົ່ງວຽກ ແລະ ຜູ້ຮັບວຽກໄດ້ກວດຢ້ຽມຄົນເຈັບຮ່ວມກັນ
- ຜູ້ສົ່ງວຽກ ແລະ ຜູ້ຮັບວຽກໄດ້ກວດຢ້ຽມເຄື່ອງມືເຄື່ອງໃຊ້, ສິ່ງແວດລ້ອມ ແລະ ຊັບພະຍາກອນຮ່ວມກັນ
- ມີການອະທິບາຍ, ຊັກຖາມຂໍ້ມູນ ແລະ ປຶກສາແນວທາງການປະຕິບັດການພະຍາບານຮ່ວມກັນລະຫວ່າງຜູ້ສົ່ງວຽກ ແລະ ຜູ້ຮັບວຽກ
- ໃຊ້ເວລາໃນການສົ່ງວຽກ-ຮັບວຽກ ປະມານ 30 - 40 ນາທີ.

## ຂໍ້ແນະນຳໃນການຮັບຄົນເຈັບເຂົ້ານອນ

- ຕຽມຕຽງ ແລະເຄື່ອງນຸ່ງຄົນເຈັບຕາມຄວາມເໝາະສົມກັບຄົນເຈັບ
- ຕຽມເອກະສານໃບພະຍາບານ, kardex, ຫຼັກຫ້ອຍສານນໍ້າ, Tag IV, ປ້າຍ Tag ສຳລັບຕິດວັນທີ ເລີ່ມໃສ່ສານນໍ້າ



- ຕຽມເອກກະສານໃນການໃຫ້ຄຳແນະນຳສຳລັບຄົນເຈັບ ແລະພີ່ນ້ອງກ່ຽວກັບການໃຫ້ການບໍລິການຂອງໂຮງໝໍ
- ຮັບຄົນເຈັບລົງລໍ້ນຳສົ່ງ, ແນະນຳຕົວເອງ ແລະ ຮ້ອງຊື່ຄົນເຈັບ
- ຊັກປະຫວັດການເຈັບເປັນ ແລະ ເອົາອາການຊີວິດ
- ໃຫ້ຄຳແນະນຳກ່ຽວກັບສະຖານທີ່ ແລະ ກົດລະບຽບຂອງໂຮງໝໍ
- ໃຫ້ຄຳແນະນຳເລື່ອງອາຫານ ແລະ ເວລາໃຫ້ຢາແກ່ຄົນເຈັບ
- ເລີ່ມໃຫ້ຢາຕາມຄຳສັ່ງປິ່ນປົວຂອງທ່ານໝໍ, ເຈາະເລືອດ ຫຼື ຕິດຕາມຜົນກວດຕ່າງໆ
- ລາຍງານທ່ານໝໍຕາມນະໂຍບາຍຂອງໂຮງໝໍ
- ຕື່ມຂໍ້ມູນຄົນເຈັບໃນໃບພະຍາບານ
- ຂຽນ Kardex ແລະ ວາງແຜນການພະຍາບານ
- ບັນທຶກສະຖິຕິຄົນເຈັບເຂົ້າໃໝ່
- ບັນທຶກການພະຍາບານ ແລະ ບັນທຶກໃບອາການຊີວິດ
- ຕິດຕາມປະເມີນຜົນການພະຍາບານ

## ຂໍ້ແນະນຳໃນການຈັດຢາ

1. ຈັດຢາຈາກ Kardex
2. ຈັດຢາຕາມເວລາ
3. ບັນທຶກການໄດ້ຮັບຢາຂອງຄົນເຈັບລົງໃນໃບບັນທຶກການໃຫ້ຢາ
4. ວາງແຜນການໄດ້ຮັບສານນໍ້າຂອງຄົນເຈັບ

**ຂໍ້ແນະນຳໃນການນຳທ່ານໝໍໄປກວດຢ້ຽມຄົນເຈັບVisit**

- ຕຽມເອກກະສານຄົນເຈັບ, ພົນກວດວິເຄາະ, ຜົນຊ່ອງໄຟຟ້າໃຫ້ຖືກຕ້ອງກົງກັບຄົນເຈັບ
- ຕຽມໃບສັ່ງຢາ, ໃບສັ່ງກວດຕ່າງໆໃຫ້ມີພຽງພໍ ແລະ ພ້ອມໃຊ້ໃນລ້ໍເອກະສານ
- ຕຽມເຫຼົ້າຢາຂ້າເຊື້ອມີ 70% ສຳລັບເຮັດອະນາໄມມື
- ຕຽມອຸປະກອນໃນການກວດຕ່າງໆ ເຊັ່ນ: ໄຟສາຍ, ເຫຼັກກົດລີ້ນ , ກ້ອງຟັງ
- ມີມະນຸດສຳພັນກັບທ່ານໝໍ, ຄົນເຈັບ ແລະພີ່ນ້ອງໃນລະຫວ່າງທີ່ທ່ານໝໍກວດຢ້ຽມຄົນເຈັບ, ໃຫ້ຄຳແນະນຳສຸຂະສຶກສາແກ່ຄົນເຈັບ ແລະພີ່ນ້ອງ
- ຊ່ວຍທ່ານໝໍໃນການກວດຕ່າງໆ ເຊັ່ນ: ການກວດພາຍໃນຮູຄົນເຈັບ, ການຈັດທ່າຄົນເຈັບ, ການປົກປິດຄົນເຈັບໃນລະຫວ່າງການກວດ
- ຊ່ວຍທ່ານໝໍໃນການຂຽນໃບສັ່ງຢາ ແລະໃບສັ່ງກວດຕ່າງໆ
- ອະທິບາຍ ຕອບຄຳຖາມ, ໃຫ້ຄຳແນະນຳໃນການປະຕິບັດຕົວແກ່ຄົນເຈັບ ແລະພີ່ນ້ອງ

**ຂໍ້ແນະນຳໃນການຮັບຄຳສັ່ງການປິ່ນປົວລົງໃນ Kardex**

- ຂຽນວັນທີທີ່ສັ່ງການປິ່ນປົວໃນຊ່ອງວັນທີ (Date)
- ຢາທີ່ເປັນຄຳສັ່ງຕໍ່ເນື່ອງໃຫ້ຂຽນຄຳສັ່ງໃນຊ່ອງຢາຕໍ່ເນື່ອງ (Medications) ຂຽນເວລາທີ່ໃຫ້ຢາໃນຊ່ອງເວລາ (Time) ຂຽນເຄື່ອງໝາຍ ຊ່ອງເວລາດ້ວຍສີເມື່ອຈັດຢາແລ້ວ
- ເມື່ອທ່ານໝໍສັ່ງຢຸດຢາໃຫ້ໃຊ້ສີຂີດລົງຊື່ຢານັ້ນລວມທັງເວລາທີ່ໃຫ້ຢາດ້ວຍ
- ຂຽນຄຳສັ່ງການປິ່ນປົວຄັ້ງດຽວໃນຊ່ອງຄຳສັ່ງຄັ້ງດຽວທັງຊະນິດທີ່ເປັນຢາ, ສານນ້ຳ, ການໃຫ້ເລືອດ (Blood Transfusion) ລວມທັງການປິ່ນປົວອື່ນໆ ເຊັ່ນ: ໃສ່ສາຍທໍ່ອາຫານ, ການສວນຖ່າຍ, ການຮັກສາທໍ່ສວນຍ່ຽວ, ຕຽມຜ່າຕັດ ເປັນຕົ້ນ, ຂຽນເວລາທີ່ປະຕິບັດ/ເວລາຕໍ່ສານນ້ຳໃນຊ່ອງເວລາທີ່ປະຕິບັດ (Time )
- ຄົນເຈັບງົດອາຫານ NPO ໃຫ້ຂຽນໃນຊ່ອງອາຫານ (Diet) ດ້ວຍສີດາ



- ເມື່ອຮັບຄົນເຈັບເຂົ້າໃໝ່ໃຫ້ຂຽນປະຫວັດການເຈັບເປັນລົງໃນຊ່ອງປະຫວັດການເຈັບເປັນ(History) ແລະຂຽນແຜນການພະຍາບານລົງໃນຊ່ອງແຜນການພະຍາບານ (Nursing Care Plan) ເຊັ່ນ: ອາການຊີວິດທຸກ 4 ຊມ (Vital Signs Q 4h (ລະບຸ ເວລາ), ບັນທຶກນ້ຳເຂົ້າ-ນ້ຳອອກທຸກ 8 ຊມ(Q 8h)(ລະບຸເວລາ), ປ່ຽນສານນ້ຳ ແລະສາຍນ້ຳ (ລະບຸເວລາ) ເປັນຕົ້ນ
- ຂີດເຄື່ອງໝາຍ □ ທີ່ເວລາດ້ວຍສີດຳ ເມື່ອປະຕິບັດແລ້ວ
- ຫົວໜ້າທີມກວດສອບຄວາມຖືກຕ້ອງຂອງ Kardex ທຸກວັນ, ລຶບເຄື່ອງໝາຍ □ ທີ່ເວລາເພື່ອຕຽມໃຫ້ ພະຍາບານຜູ້ຈັດຢາຕໍ່ໄປ
- ກວດສອບ ປະເມີນ ແລະປັບປຸງແຜນການພະຍາບານທຸກວັນ
- ເມື່ອຄົນເຈັບຍ້າຍຕຶກໃຫ້ສົ່ງ Kardex ໄປພ້ອມກັບຄົນເຈັບ
- ເມື່ອຄົນເຈັບກັບບ້ານໃຫ້ເກັບໃບ Kardexໄວ້ໃນຕຶກຢ່າງໜ້ອຍ 3 ວັນເພື່ອໃຊ້ປະໂຫຍດໃນການກວດສອບຍ້ອນຫຼັງ.

# ລາຍຊື່ຜູ້ປະກອບສ່ວນ

## 1. ຄະນະຊີ້ນຳ/ທີ່ປຶກສາ:

| | |
|---|---|
| ທ່ານ ຣສ ດຣ ບຸນກອງ ສີຫາວົງ | ລັດຖະມົນຕີ ກະຊວງ ສາທາລະນະສຸກ |
| ທ່ານ ຣສ ດຣ ພູທອນ ເມືອງປາກ | ຮອງ ລັດຖະມົນຕີ ກະຊວງ ສາທາລະນະສຸກ |
| ທ່ານ ຣສ ດຣ ຈັນພົມມາ ວົງສຳພັນ | ຫົວໜ້າກົມ ກົມປິ່ນປົວ |
| ທ່ານ ຣສ ດຣ ບຸນໜັກ ໄຊຊະນະສົງຄາມ | ຮອງຫົວໜ້າກົມ ກົມປິ່ນປົວ |
| ທ່ານ ດຣ ພິສິດ ພຸດສະຫວັດ | ຮອງຫົວໜ້າກົມ ກົມປິ່ນປົວ |

## 2. ທີມງານຜູ້ປະກອບສ່ວນ:

| | |
|---|---|
| ທ່ານ ນ ແພງດີ ອິນທະພານິດ | ຫົວໜ້າຫ້ອງການຄຸ້ມຄອງວິຊາ ຊີບປິ່ນປົວ |
| ທ່ານ ສຸກສະຫວັນ ພັນປະເສີດ | ຮອງຄະນະບໍດີ ຄະນະ ພະຍາບານສາດ |
| ທ່ານ ນ ແສງມະນີ ຄຳບຸນເຮືອງ | ຫົວໜ້າພະແນກການສຶກສາ ລຸ່ມມະຫາວິທະຍາໄລ |
| ທ່ານ ນ ວຽງສະຫວັນ ສອນສິນໄຊ | ຮອງຫົວໜ້າຫ້ອງການຄຸ້ມຄອງ ວິຊາຊີບປິ່ນປົວ |
| ທ່ານ ດຣ ອານຸສອນ ສີສຸລາດ | ຮອງຫົວໜ້າພາກວິຊາ ພະຍາບານສາດ |
| ທ່ານ ອຳມະລິນ ພົງສະຫວັດ | ວິຊາການ ກົມການສຶກສາ |
| ທ່ານ ນ ອໍລະພິມ ພຸດທະວົງ | ຮອງຫົວໜ້າພະແນກ ຢາພື້ນເມືອງ ກົມປິ່ນປົວ |



| | |
|---|---|
| ທ່ານ ນ ບົວວັນ ປະທຸມທອງ | ຫົວໜ້າພະແນກພະຍາບານ ຣ/ໜ ມະໂຫສົດ |
| ທ່ານ ນ ມະນີວອນ ສີລີວົງ | ຫົວໜ້າພະຍາບານກວດເຂດ ນອກ ຣ/ໜ ມະໂຫສົດ |
| ທ່ານ ນ ຄຳຫຼ້າ ສີອຸດົມ | ຫົວໜ້າພະແນກພະຍາບານ ຣ/ໜ ເຊດຖາທິຣາດ |
| ທ່ານ ນ ເລີດມະນີ ສີສຸພັນທະວົງ | ຫົວໜ້າພະແນກພະຍາບານ ຣ/ໜ ມິດຕະພາບ |
| ທ່ານ ນ ທິບລານີ ຈູມມະນີວົງ | ຫົວໜ້າພະແນກພະຍາບານ ຣ/ໜ ແມ່ ແລະເດັກເກີດໃໝ່ |
| ທ່ານ ນ ບຸນມາລາ ສໍປະເສີດ | ຫົວໜ້າພະແນກພະຍາບານ ຣ/ໜ ເດັກ |
| ທ່ານ ນ ກິ່ງແກ້ວ ວີວັນ | ວິຊາການ ກົມປິ່ນປົວ |
| ທ່ານ ນ ສົມສະນຸກ ສິງຄຳ | ວິຊາການ ກົມປິ່ນປົວ |
| ທ່ານ ດຣ ນິບພະວັນ ພານຸສິດ | ວິຊາການ ກົມປິ່ນປົວ |

## 3. ກວດແກ້ໂດຍ:

| | |
|---|---|
| ທ່ານ ນ ແພງດີ ອິນທະພານິດ | ຫົວໜ້າຫ້ອງການຄຸ້ມຄອງວິຊາ ຊີບປິ່ນປົວ |